# **ຄູ່ມືນະໂຍບາຍ**ກ່ຽວກັບການເຮັດໃຫ້ ການລັກລອບເອົາຄົນເຂົ້າ-ອອກປະເທດ ເປັນການກະທຳຜິດທາງອາຍາ




ຄຳແນະນຳ ສຳລັບຜູ້ກຳນົດນະໂຍບາຍ ແລະ ຜູ້ຈັດຕັ້ງປະຕິບັດພັນທະດ້ານ ກົດໝາຍສາກົນ ເພື່ອກຳນົດການ ລັກລອບເອົາຄົນເຂົ້າ-ອອກປະເທດ ໃຫ້ເປັນການກະທຳຜິດທາງອາຍາ ໃນກົດໝາຍພາຍໃນ

**ຄູ່ມືນະໂຍບາຍສະບັບນີ້** ອາດຖືກນຳໃຊ້ ໂດຍບັນດາປະເທດທັງໝົດທີ່ເຂົ້າຮ່ວມ Bali Process (ບາລີ ໂປຣເຊສ໌), ລວມທັງບັນດາປະເທດທີ່ບໍ່ທັນໄດ້ລົງນາມ ແລະ/ຫຼື ໃຫ້ສັດຕະຍາບັນ ຕໍ່ສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (the United Nations Convention against Transnational Organized Crime (Organized Crime Convention) ແລະ ອະນຸສັນຍາເພີ່ມເຕີມສອງສະບັບຂອງສົນທິສັນຍານັ້ນ: ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ໂດຍທາງບົກ, ທະເລ ແລະ ອາກາດ (the Protocol against the Smuggling of Migrants by Land, Sea and Air) ແລະ ອະນຸສັນຍາວ່າດ້ວຍການສະກັດກັ້ນ, ການປາບປາມ ແລະ ການລົງໂທດຜູ້ຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກ (the Protocol to Prevent, Suppress and Punish Trafficking in Persons, Especially Women and Children) . ຄຳສັບທີ່ນຳໃຊ້ໃນຄູ່ມືນະໂຍບາຍນີ້ ສອດຄ່ອງກັບບັນດານິຕິກຳສາກົນທັງສາມສະບັບນີ້ເທົ່າທີ່ຈະເປັນໄປໄດ້. ເຖິງຢ່າງໃດກໍຕາມ ເພື່ອຈຸດປະສົງຂອງການແປເອກະສານ, ການແປສົນທິສັນຍາ ແລະ ອະນຸສັນຍາເຫຼົ່ານີ້ ຄວນມີການຮັບຮອງທາງການ ເພື່ອທີ່ຈະໃຊ້ເປັນເອກະສານອ້າງອີງໄດ້ ໃນການນຳໃຊ້ຄຳສັບໃນຄູ່ມືນະໂຍບາຍສະບັບນີ້.




Bali Process (ບາລີ ໂປຣເຊສ໌) ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ (Bali Process (ບາລີ ໂປຣເຊສ໌))ໄດ້ຖືກສ້າງຂຶ້ນ ໃນປີ 2002 ແລະ ແມ່ນຂະບວນການປຶກສາຫາລືດ້ວຍຄວາມສະໝັກໃຈ ແລະ ບໍ່ມີຂໍ້ຜູກພັນຊຶ່ງເປັນເຈົ້າການຮ່ວມໂດຍລັດຖະບານອົດສະຕຣາລີ ແລະ ອິນໂດເນເຊຍ ແລະປະກອບມີ 45 ປະເທດສະມາຊິກ ແລະ ອົງການຈັດຕັ້ງຕ່າງໆເຂົ້າຮ່ວມ

ບັນດາຂໍ້ສົງໃສກ່ຽວກັບຄູ່ມືນະໂຍບາຍນີ້ໄດ້ ຈະຕ້ອງສະເໜີຕໍ່ Regional Support Office (RSO) ຂອງ Bali Process (ບາລີ ໂປຣເຊສ໌)ຕາມບ່ອນຢູ່:

Email: info@rso.baliprocess.net

RSO website:

http://www.baliprocess.net/regional-support-office

ພິມເຜີຍແຜ່ ເດືອນ ສິງຫາ  2014.

ອອກແບບໜ້າຕາເອກະສານໂດຍ ໂອຍະການສູງສຸດ

ລັດຖະບານອົດສະຕຣາລີ,

# ການສະແດງຄວາມຂອບໃຈ

ຄູ່ມືນະໂຍບາຍສະບັບນີ້ ໄດ້ຖືກສ້າງຂຶ້ນໂດຍສະມາຊິກຂອງBali Process (ບາລີ ໂປຣເຊສ໌) , ໄດ້ຮັບການສະໜັບສະໜູນ ໂດຍຫ້ອງການສະໜັບສະໜູນໃນພາກພື້ນ ແລະ ຊີ້ນຳໂດຍ ຄະນະກຳມະການຮ່າງນະໂຍບາຍແນະນຳຂອງBali Process (ບາລີ ໂປຣເຊສ໌), ປະກອບດ້ວຍສະມາຊິກ ດັ່ງຕໍ່ໄປນີ້:

Australian Government
Attorney-General's Department

**Dananthi Galapitage (ດານາທີ ກາລາພິຕາເກ),**
ເຈົ້າໜ້າທີ່ກົດໝາຍ ລະດັບຜູ້ອາວຸໂສ,
ພະແນກຮ່ວມມືສາກົນດ້ານອາຊະຍາກຳ
ອົງການໄອຍະການສູງສຸດ,
ປະເທດອົດສະຕຣາລີ (ປະທານຮ່ວມ)

---

**Chatchom Akapin (ຊັດຈອມ ອາກາພິນ),**
ຫົວໜ້າ,
ພົວພັນຕ່າງປະເທດ (ເຂດ 1),
ຫ້ອງການອົງການໄອຍະການສູງສຸດ,
ປະເທດໄທ (ປະທານຮ່ວມ)

---

**Andhika Chrisnayudhanto (ອາທິກາ ຄລິສນາຍດດາໂຕ),**
ຮັກສາການຮອງຫົວໜ້າກົມ,
ກົມສົນທິສັນຍາຄວາມໝັ້ນຄົງ ແລະ ການເມືອງ,
ກະຊວງການຕ່າງປະເທດ,
ປະເທດອິນໂດເນເຊັຍ

---

IMMIGRATION NEW ZEALAND

**Rebecca Miller (ເຣເບັກກາ ມີເລີ),**
ຜູ້ປະສານງານໂຄງການ Bali Process (ບາລີ ໂປຣເຊສ໌),
ຫ້ອງການກວດຄົນເຂົ້າ-ອອກປະເທດ ນິວແລນເຊລັງ,
ກະຊວງທຸລະກິດ, ສິ່ງປະດິດ ແລະ ການຈ້າງງານ,
ປະເທດນິວແລນເຊລັງ

---

Ministry of Justice
Sri Lanka

**Anusha Abeywickrama-Munasinghe (ອານຸສາ ອາບີວິກຣາມາ-ມູນນາຊີງ),**
ຜູ້ຊ່ວຍລະດັບອາວຸໂສ,
ກົມກົດໝາຍ,
ກະຊວງຍຸຕິທຳ,
ປະເທດສີລັງກາ

---

UNODC
United Nations Office on Drugs and Crime

**Sebastian Baumeister (ເຊບາດສະຕຽນ ໂບໄມສະເຕີ),**
ຜູ້ປະສານງານໂຄງການ,
ສຳນັກງານ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ແລະປາຊີຟິກ ອົງການ UNODC

---

IOM • OIM

ການຊ່ວຍເຫຼືອເພີ່ມເຕີມແກ່ຄະນະຮ່າງນະໂຍບາຍຈາກ:
**Sophie Nonnenmacher (ໂຊຟີ ໂນນເນເມເຊີ)**
ຜູ້ຕາງໜ້າ Regional Support Office ຂອງອົງການ IOM

---

ບັນດາຂໍ້ສົງໃສກ່ຽວກັບຄູ່ມືນະໂຍບາຍນີ້ ຄວນຈະສະເໜີຕໍ່ຫ້ອງການ RSO ຕາມອີເມລ info@rso.baliprocess.net



# The Bali **Process** (ບາລີ ໂປຣເຊສ໌)

# ຄຳນຳ

**ນັບແຕ່ໄດ້ມີການເລີ່ມຕົ້ນ Bali Process (ບາລີ ໂປຣເຊສ໌) ໃນປີ 2002,** Bali Process (ບາລີ ໂປຣເຊສ໌)ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ (ຕໍ່ໄປນີ້ເອີ້ນວ່າBali Process (ບາລີ ໂປຣເຊສ໌)) ໄດ້ປູກຈິດສຳນຶກໃນພາກພື້ນຢ່າງມີປະສິດທິຜົນກ່ຽວກັບຜົນສະທ້ອນຂອງການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ ແລະ ຍັງໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດບັນດາຍຸດທະສາດ ແລະ ການຮ່ວມມືໃນພາກປະຕິບັດຕົວຈິງໃນເລື່ອງດັ່ງກ່າວ. ໄດ້ມີສະມາຊິກຫຼາຍກວ່າ 45 ປະເທດ ແລະ ອົງການຈັດຕັ້ງສາກົນ ລວມທັງບັນດາປະເທດທີ່ສັງເກດການຈຳນວນໜຶ່ງ ແລະ ອົງກອນສາກົນຕ່າງໆ ໄດ້ເຂົ້າຮ່ວມກອງະຊຸມປຶກສາຫາລືແບບສະໝັກໃຈນີ້.

ກອງປະຊຸມລັດຖະມົນຕີຂອງBali Process (ບາລີ ໂປຣເຊສ໌)ຄັ້ງທີ V ທີ່ຈັດຂຶ້ນໃນເດືອນ ເມສາ 2013, ບັນດາລັດຖະມົນຕີຕົກລົງວ່າຄວນສ້າງຄູ່ມືນະໂຍບາຍເພື່ອຊ່ວຍເຫຼືອຜູ້ວາງນະໂຍບາຍ ແລະ ຜູ້ປະຕິບັດງານຕົວຈິງໃນການກຳນົດ ການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ ໃຫ້ເປັນການກະທຳຜິດທາງອາຍາ. ບັນດາລັດຖະມົນຕີໄດ້ມອບໃຫ້ຫ້ອງການ Regional Support Office (RSO) ໃນພາກພື້ນເພື່ອການປຶກສາຫາລືກັບບັນດາສະມາຊິກທີ່ມີຄວາມສົນໃຈ ສ້າງຄຳແນະນຳ ເພື່ອຊ່ວຍໃຫ້ບັນດາໜ່ວຍງານພາຍໃນປະເທດໄດ້ສົ່ງເສີມ ຄວາມເຂົ້າໃຈທີ່ແນ່ນອນ ກ່ຽວກັບພັນທະກົດໝາຍສາກົນ ແລະ ເພື່ອຊ່ວຍໃນການພັດທະນາກົດໝາຍພາຍໃນໃຫ້ມີປະສິດທິຜົນ.ນອກຈາກນີ້ ຕາມຄຳແນະນຳ ຫ້ອງການ Regional Support Office (RSO) ໃນພາກພື້ນໄດ້ສ້າງຕັ້ງຄະນະກຳມະການຮ່າງຄຳແນະນຳທີ່ປະກອບດ້ວຍບັນດາຊ່ຽວຊານຈາກສະມາຊິກຂອງ Bali Process (ບາລີ ໂປຣເຊສ໌) ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອສ້າງຄູ່ມືນະໂຍບາຍນີ້.

ຄູ່ມືນະໂຍບາຍນີ້ ແມ່ນເປັນຄຳສະເໜີແນະນຳ, ບໍ່ບັງຄັບ ແລະ ມີເຈຕະນາໃຫ້ນຳໃຊ້ເປັນນິຕິກຳ ເພື່ອເປັນບ່ອນອີງໃຫ້ບັນດາໜ່ວຍງານຕ່າງໆພາຍໃນ ປະເທດສະມາຊິກ Bali Process (ບາລີ ໂປຣເຊສ໌). ເພື່ອເຮັດໃຫ້ບັນດາຄຳແນະນຳໃນຄູ່ມືນະໂຍບາຍສັ້ນ, ກະທັດຣັດ ສາມາດຈັດຕັ້ງປະຕິບັດ ແລະ ນຳໃຊ້ໄດ້ງ່າຍ, ຄູ່ມືນະໂຍບາຍແມ່ນສຸມໃສ່ ການກຳນົດການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ ເປັນການກະທຳຜິດທາງອາຍາ ໃນກົດໝາຍພາຍໃນເພື່ອເຮັດແນວໃດໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນ. ບັນຫາການປົກປ້ອງ ແລະ ການຊ່ວຍເຫຼືອແກ່ຜູ້ທີ່ຖືກເຄາະຮ້າຍຈາກການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ ໄດ້ຖືກກຳນົດໄວ້ ພາຍໃນຂອບເຂດຂອງຄຳແນະນຳນີ້ຢ່າງຮອບດ້ານ, ແຕ່ກໍເປັນທີ່ຄາດຫວັງວ່າ ບັນດາບັນຫາເຫຼົ່ານີ້ອາດຖືກຜັນຂະຫຍາຍຕື່ມອີກໃຫ້ກວ້າງຂວາງ ເພື່ອແກ້ໄຂໄດ້ຢ່າງຮອບດ້ານໂດຍຄູ່ມືນະໂຍບາຍທີ່ອອກໃໝ່ໃນອະນາຄົດ. ໂດຍສອດຄ່ອງກັບຄຳສະເໜີແນະນຳຂອງກອງປະຊຸມລັດຖະມົນຕີຄັ້ງທີ V ໃນເດືອນ ເມສາ 2013, ຄູ່ມືນະໂຍບາຍສະບັບນີ້ຈະເວົ້າເຖິງນະໂຍບາຍຂອງເວທີບາລີ ທີ່ກວມເອົາຂົງເຂດທີ່Bali Process (ບາລີ ໂປຣເຊສ໌)ໃຫ້ຄວາມສົນໃຈ ແລະ ບັນຫາສະເພາະທີ່ສະມາຊິກຂອງBali Process (ບາລີ ໂປຣເຊສ໌) ໃຫ້ຄວາມສົນໃຈ.

Greg Kelly (ກຣີກ ເຄລີ)
ຮ່ວມຕຳແໜ່ງຫົວໜ້າ RSO (ອົດສະຕຣາລີ)

Bebeb A.K.N. Djundjunan (ເບເບບ ຈຸນຈູນານ)
ຮ່ວມຕຳແໜ່ງຫົວໜ້າ RSO (ອິນໂດເນເຊຍ)

Regional Support Office
THE BALI PROCESS

# ຄໍາຫຍໍ້ ແລະ ຄວາມໝາຍ

| | |
|---|---|
| ອາຊຽນ (ASEAN) | ສະມາຄົມປະຊາຊາດຕາເວັນອອກສ່ຽງໃຕ້ (Association of Southeast Asian Nations) |
| Bali Process (ບາລີ ໂປຣເຊສ໌) | Bali Process (ບາລີ ໂປຣເຊສ໌) ໂຄງການລະດັບສາກົນກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກໍາຂ້າມຊາດທີ່ກ່ຽວຂ້ອງ |
| FATF | ຄະນະກໍາມະການສະເພາະກິດ ເພື່ອດໍາເນີນມາດຕະການທາງການເງິນຕ້ານການຟອກເງິນ (Financial Action Task Force) |
| IOM | ອົງການສາກົນເພື່ອການເຄື່ອນຍ້າຍແຮງງານ (International Organization for Migration) |
| MLA | ການຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍ (Mutual legal assistance) |
| Organized Crime Convention (TOCC) | ສົນທິສັນຍາຂອງອົງການສປຊ ວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (United Nations Convention against Transnational Organized Crime) |
| RSO | ຫ້ອງການສະໜັບສະໜູນໃນພາກພື້ນ (Regional Support Office) |
| Organized Crime Convention Protocols | ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດໂດຍທາງບົກ, ທະເລ ແລະ ອາກາດ, ເປັນເອກະສານເພີ່ມເຕີມໃຫ້ແກ່ສົນທິສັນຍາຂອງອົງການສປຊ ວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (Protocol against the Smuggling of Migrants by Land, Sea, and Air, supplementing the United Nations Convention against Transnational Organized Crime) |
| ອົງການ ສປຊ (UN) | ອົງການສະຫະປະຊາຊາດ (United Nations) |
| UNCAC | ສົນທິສັນຍາຂອງອົງການ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (United Nations Convention against Corruption) |
| UNODC | ຫ້ອງການຂອງອົງການ ສປຊ ຕ້ານຢາເສບຕິດ ແລະ ອາຊະຍາກໍາ (United Nations Office on Drugs and Crime) |

# ສາລະບານ

**ສັງລວມຫຍໍ້** 2

พาภ 1 : **ການສະເໜີກ່ຽວກັບການລັບລອບເອົາຄົນເຂົ້າ-ອອກປະເທດ ແລະເຄົ້າໂຄງຮ່າງກົດໝາຍສາກົນທີ່ກ່ຽວຂ້ອງ** 3

1.1. ການລັກລອບເອົາຄົນເຂົ້າ-ອອກປະເທດ: ອາຊະຍາກຳທີ່ທ້າທາຍ 3

1.2. ນິຕິກຳສາກົນທີ່ສຳຄັນ 3

1.3. ຄວາມໝາຍຂອງການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການກຳນົດການກະທຳຜິດເປັນການກະທຳຜິດທາງອາຍາ 4

1.3.1. ຄວາມໝາຍຂອງ "ການລັກລອບເອົາຄົນເຂົ້າ-ອອກປະເທດ" 4

1.3.2. ການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ-ການດຳເນີນການໃຫ້ເຂົ້າປະເທດຢ່າງຜິດກົດໝາຍ 5

1.3.3. ການກະທຳຜິດໃນສະຖານຊ່ວຍເຫຼືອໃຫ້ມີທີ່ຢູ່ອາໄສຢ່າງຜິດກົດໝາຍ 5

1.3.4. ການກະທຳຜິດກ່ຽວກັບເອກະສານ 5

1.3.5. ຂອບເຂດຄວາມຮັບຜິດຊອບທາງອາຍາ 7

1.3.6. ສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ 8

1.4. ວ່າດ້ວຍໂທດ 9

1.5. ຄວາມແຕກຕ່າງລະຫວ່າງ ການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ 9

1.6. ສິດອຳນາດສານ-ລວມທັງສິດອຳນາດນອກເຂດດິນແດນ 11

พาภ 2 : **ພັນທະເພີ່ມເຕີມທີ່ສຳຄັນ ທີ່ກຳນົດໄວ້ໃນສົນທິສັນຍາ ຂອງອົງການ ສປຊ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ** 13

2.1. ວິທີການທີ່ປະສົມປະສານທີ່ເກີດຜົນໃນການເຮັດໃຫ້ການລັກລອບເອົາຄົນເຂົ້າ-ອອກປະເທດເປັນການກະທຳຜິດທາງອາຍາ 13

2.2. "ຕິດຕາມເງິນ"-ແມ່ນຍຸດທະສາດສຳຄັນໃນການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ 13

2.2.1. ການກະທຳຜິດໃນສະຖານການຟອກເງິນ ແລະ ມາດຕະການອື່ນໆ 13

2.2.2. ການຮິບຊັບຈາກການກະທຳຜິດທາງອາຍາ 15

2.3. ການຮ່ວມມືສາກົນ ແລະ ເງື່ອນໄຂພາຍໃຕ້ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ 16

2.3.1. ການສົ່ງຜູ້ຮ້າຍຂ້າມແດນ 16

2.3.2. ການຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານກົດໝາຍ 17

2.4. ການກຳນົດການສໍ້ລາດບັງຫຼວງເປັນການກະທຳຜິດທາງອາຍາ 19

พาภ 3 : **ສັງລວມຂໍ້ຄິດເຫັນສຳລັບການສ້າງກົດໝາຍທີ່ມີປະສິດທິຜົນ** 20





# ສັງລວມຫຍໍ້

ການລັກລອບເອົາຄົນເຂົ້າ-ອອກປະເທດ- ຫຼື ການລັກລອບນໍາຄົນເຂົ້າ-ອອກປະເທດ ແມ່ນ ການເຄື່ອນຍ້າຍຂ້າມແດນທີ່ບໍ່ປົກກະຕິຂອງຄົນ ແລະ ມີການອໍານວຍຄວາມສະດວກໃຫ້ມີການເຄື່ອນຍ້າຍນັ້ນເພື່ອຜົນປະໂຫຍດທາງການເງິນ ຫຼື ຜົນປະໂຫຍດດ້ານອື່ນໆ.

ບັນດາລັດຕ້ອງມີກົດໝາຍທີ່ເຂັ້ມແຂງເພື່ອຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ປົກປ້ອງຜູ້ທີ່ຕົກເປັນຜູ້ເຄາະຮັາຍ. ມີນິຕິກໍາຂອງສາກົນສອງສະບັບທີ່ຊຸກຍູ້ການສ້າງຕັ້ງເຄົ້າໂຄງຮ່າງທາງດ້ານກົດໝາຍກ່ຽວກັບການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດແມ່ນ: ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດໂດຍທາງບົກ, ທະເລ ແລະ ອາກາດ ຊຶ່ງເປັນເອກະສານເພີ່ມເຕີມໃຫ້ແກ່ນິຕິກໍາອີກສະບັບໜຶ່ງກໍຄືສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ. ການລັກລອບເອົາຄົນເຂົ້າ-ອອກປະເທດ ແຕກຕ່າງກັນຈາກການຄ້າມະນຸດ ຊຶ່ງດັດປັບໂດຍອະນຸສັນຍາສະບັບອື່ນແຍກຕ່າງຫາກ ແຕ່ອະນຸສັນຍາທັງສອງສະບັບນັ້ນຢູ່ພາຍໃຕ້ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງເຊັ່ນດຽວກັນ.

ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ກໍານົດໃຫ້ບັນດາລັດພາຄີຕ້ອງກໍານົດການກະທໍາຜິດດັ່ງລຸ່ມນີ້ເປັນການກະທໍາຜິດທາງອາຍາ:

- ການລັກລອບເອົາຄົນເຂົ້າ-ອອກປະເທດ-ແມ່ນການດໍາເນີນການໃຫ້ຄົນເຂົ້າປະເທດໜຶ່ງຢ່າງຜິດກົດໝາຍ;
- ການໃຫ້ບ່ອນຢູ່ອາໄສຢ່າງຜິດກົດໝາຍ-ແມ່ນການຈັດຫາບ່ອນຢູ່ອາໄສໃຫ້ບຸກຄົນໃດໜຶ່ງໃນປະເທດໃດໜຶ່ງຢ່າງຜິດກົດໝາຍ, ເຖິງແມ່ນວ່າບຸກຄົນນັ້ນຫາກເຂົ້າປະເທດຢ່າງຖືກກົດໝາຍກໍ
- ການສ້າງເອກະສານທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດ ເຊັ່ນຕົວຢ່າງ, ການສ້າງເອກະສານປອມສໍາລັບການເດີນທາງ ເຊັ່ນ ວີຊາປອມ ແລະ ບັດປະຈໍາຕົວປອມ.

ອະນຸສັນຍາຍັງຮຽກຮ້ອງໃຫ້ບັນດາລັດພາຄີກໍານົດເອົາ ຄວາມພະຍາຍາມກະທໍາຜິດຂ້າງເທິງນີ້ ໃຫ້ເປັນເປັນການກະທໍາຜິດທາງອາຍາເຊັ່ນດຽວກັນ ເຊັ່ນ ການສົມຮູ້ຮ່ວມຄິດໃນບັນດາການກະທໍາຜິດເຫຼົ່ານີ້, ແລະ ການຈັດຕັ້ງ ຫຼື ການສັ່ງບຸກຄົນໃດໜຶ່ງ ຫຼື ຫຼາຍຄົນໃຫ້ກະທໍາຜິດດັ່ງກ່າວ. ບັນດາລັດພາຄີ ຄວນຮັບປະກັນວ່າ ການກະທໍາຜິດເຫຼົ່ານີ້ຈະຖືກລົງໂທດໜັກໄດ້ໃນກໍລະນີທີ່ຮ້າຍແຮງ ເຊັ່ນ ຊີວິດຂອງຜູ່ທີ່ຖືກລັກລອບ ຕົກຢູ່ໃນອັນຕະລາຍ.

ການລັກລອບເອົາຄົນເຂົ້າ-ອອກປະເທດຍ່ອມມີລັກສະນະຂ້າມຊາດ ແລະ ຕາມຄໍານິຍາມແລ້ວ ຕ້ອງປະກອບມີການເຄື່ອນຍ້າຍຢ່າງຜິດກົດໝາຍຂ້າມແດນປະເທດໜຶ່ງ. ສະນັ້ນ ມັນຈຶ່ງສໍາຄັນສໍາລັບລັດໜຶ່ງທີ່ຈະຮັບປະກັນສິດອໍານາດສານຢູ່ ນອກດິນແດນ ຫຼື ມີຄວາມສາມາດໃນການນໍາໃຊ້ສິດອໍານາດນອກດິນແດນຂອງຕົນ-ເພື່ອນໍາໃຊ້ກົດໝາຍຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ. ນີ້ຈະເຮັດໃຫ້ລັດຕ່າງໆໄດ້ສຸມໃສ່ຜູ້ລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ຜູ້ອໍານວຍຄວາມສະດວກໃນການລັກລອບເອົາຄົນເຂົ້າ-ອອກປະເທດ ທີ່ເຄື່ອນໄຫວກະທໍາຜິດທາງອາຍາຜ່ານຫຼາຍປະເທດ.

ສິ່ງສໍາຄັນທີ່ເຮັດອາຊະຍາກໍາທີ່ມີການຈັດຕັ້ງມີຄວາມຍືນຍົງ, ລວມທັງການລັກລອບເອົາຄົນເຂົ້າ-ອອກປະເທດນັ້ນແມ່ນເງິນທຶນ. ເພື່ອເຮັດໃຫ້ອົງການບັງຄັບໃຊ້ກົດໝາຍສາມາດໄດ້ເອົາໝາກຜົນຂອງການກະທໍາຜິດຈາກອົງກອນອາຊະຍາກໍາເຫຼົ່ານີ້, ບັນດາລັດຕ້ອງໄດ້ມີກົດໝາຍຕ້ານການຟອກເງິນ ແລະ ກົດໝາຍກ່ຽວກັບການຮິບຊັບທີ່ໄດ້ມາຈາກການຟອກເງິນ ທີ່ເຂັ້ມແຂງ ແລະ ແຍກອອກຕ່າງຫາກເປັນຄົນລະສະບັບ. ບັນດາລັດ ຍັງຕ້ອງມີການກົດໝາຍກ່ຽວກັບການຮ່ວມມືທາງດ້ານອາຍາລະຫວ່າງຊາດທີ່ເຂັ້ມແຂງ, ລວມທັງກົດໝາຍກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍເຊິ່ງກັນແລະກັນ. ກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນທີ່ມີປະສິດທິຜົນຈະຊ່ວຍໃຫ້ອົງການບັງຄັບໃຊ້ກົດໝາຍສາມາດນໍາຕົວຜູ້ກະທໍາຜິດມາສູ່ສານທີ່ມີອໍານາດ ເພື່ອຮ້ອງຟ້ອງດໍາເນີນຄະດີໄດ້. ກົດໝາຍກ່ຽວກັບການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ຈະຊ່ວຍໃຫ້ອົງການສືບສວນ-ສອບສວນໄດ້ເກັບກໍາຫຼັກຖານ ແລະ ແລກປ່ຽນຫຼັກຖານລະຫວ່າງປະເທດ, ເຊັ່ນ ບັນທຶກບັນຊີທະນາຄານ, ບັນທຶກການໂທລະສັບ ແລະ ຄໍາໃຫ້ການຂອງພະຍານ.

ຍ້ອນວ່າບັນດາອາຊະຍາກໍາທີ່ເປັນກຸ່ມໄດ້ລວມຕົວແລະມີການຈັດຕັ້ງຫຼາຍຂຶ້ນ ແລະ ມີການຮ່ວມມືປະສານງານເປັນສາຍໃຍການຈັດຕັ້ງທີ່ເຂັ້ມແຂງ, ມັນຈຶ່ງມີຄວາມສໍາຄັນຫຼາຍທີ່ສຸດທີ່ບັນດາປະຊາຊາດໃນໂລກຈະຕ້ອງໄດ້ຮ່ວມມືກັນ ເພື່ອຮັບປະກັນວ່າບັນດາກົດໝາຍຈະສອດຄ່ອງກັນເທົ່າທີ່ຈະເຮັດໄດ້ ເພື່ອປ້ອງກັນ ແລະ ສະກັດກັ້ນ ບັນດາອາຊະຍາກອນທີ່ສວຍໃຊ້ຊ່ອງຫວ່າງ

# ພາກ 1

## ການສະເໜີກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ເຄົ້າໂຄງຮ່າງກົດໝາຍສາກົນທີ່ກ່ຽວຂ້ອງ

### 1.1. ການລັກລອບເອົາຄົນເຂົ້າ-ອອກປະເທດ: ອາຊະຍາກໍາທີ່ທ້າທາຍ

ການລັກລອບເອົາຄົນເຂົ້າ-ອອກປະເທດ (ການຊ່ວຍບຸກຄົນໃດໜຶ່ງໃຫ້ເຂົ້າໃນປະເທດໜຶ່ງຢ່າງຜິດກົດໝາຍ ເພື່ອຜົນປະໂຫຍດທາງການເງິນ ຫຼື ຜົນປະໂຫຍດອື່ນໆ) ເກີດຂຶ້ນໃນທຸກຂົງເຂດທຸກພາກພື້ນໃນໂລກ. ຍັງບໍ່ທັນມີສະຖິຕິທີ່ ເຊື່ອຖືໄດ້ເທື່ອກ່ຽວກັບຈໍານວນຂອງຄົນທີ່ຖືກລັກລອບເອົາຄົນເຂົ້າ-ອອກປະເທດ ເນື່ອງຈາກມີຫຼາຍສິ່ງທ້າທາຍ ເຊັ່ນ ການປົກປິດ ການເຊື່ອງອໍາບັນຫານີ້ ແລະ ການບໍ່ມີລະບົບເກັບກໍາຂໍ້ມູນ.

**ພວກເຮົາຮູ້ຫຍັງແດ່ ?**

- ການລັກລອບເອົາຄົນເຂົ້າ-ອອກປະເທດ ແມ່ນທຸລະກິດແຫ່ງຄວາມຕາຍ. ຊີວິດຂອງຫຼາຍຮ້ອຍຫຼາຍພັນຄົນໄດ້ແຂວນຢູ່ເທິງສະພາບ ທີ່ເປັນໄພຂົ່ມຂູ່ ແລະ ຖືກປະຕິບັດຢ່າງໄຮ້ມະນຸດສະທໍາ ແລະ ໄດ້ສູນເສຍຊີວິດ ຍ້ອນການກະທໍາຂອງຜູ້ລັກລອບທີ່ເປັນອັນຕະລາຍ ແລະ ປະໝາດເລີ່ນເລີ້
- ການລັກລອບເອົາຄົນເຂົ້າ-ອອກປະເທດ ແມ່ນທຸລະກິດທີ່ໃຫ້ຜົນກໍາໄລຢ່າງງາມສູງ ຊຶ່ງບັນດາອາຊະຍາກອນມີຄວາມສ່ຽງໜ້ອຍຫຼາຍ ທີ່ຈະຖືກດໍາເນີນຄະດີ ຫຼື ຖືກລົງໂທດ. ຍ້ອນແນວນີ້, ອາຊະຍາກໍາປະເພດນີ້ ຈຶ່ງເພີ່ມທະວີຂຶ້ນສູງ ແລະ ຜູ້ລັກລອບກໍເລີ່ມມີການຈັດຕັ້ງກັນເປັນສາຍໃຍຢ່າງຄັກແນ່.
- ຜູ້ລັກລອບປ່ຽນແປງແກ້ໄຂບັນດາເສັ້ນທາງ ແລະ ວິທີການຕ່າງໆ ເພື່ອໃຫ້ເຂົ້າກັບການປ່ຽນແປງຂອງການຄຸ້ມຄອງຊາຍແດນ ແລະ ສະພາບການຕ່າງໆ. ສິ່ງນີ້ ເຮັດໃຫ້ຄວາມປອດໄພຂອງຜູ້ຖືກລັກລອບເອົາເຂົ້າ-ອອກປະເທດ ມີຄວາມສ່ຽງສູງ.
- ອາຊະຍາກອນຈັດໃຫ້ລັກລອບເຂົ້າ-ອອກປະເທດຊຶ່ງຫຼີບຫຼີກລະບຽບການຄຸ້ມຄອງຊາຍແດນ, ລະບຽບການກ່ຽວກັບການເຂົ້າ-ອອກປະເທດ, ແລະ ການຂໍວີຊາເຂົ້າປະເທດ. ນະໂຍບາຍນັບມື້ນັບເຂັ້ມງວດຫຼາຍຂຶ້ນກວ່າເກົ່າ ຫຼາຍເທົ່າໃດ ຍິ່ງເຮັດໃຫ້ມີຜູ້ຖືກລັກລອບ ຫຼາຍຂຶ້ນເທົ່ານັ້ນ ຍ້ອນເຂົາເຈົ້າຖືກຕົວະຍົວະຫຼອກລວງ ຈາກຜູ້ລັກລອບ ໃຫ້ໃຊ້ບໍລິການຂອງເຂົາເຈົ້າ. ບັນດາຜູ້ລີ້ໄພ ທີ່ສະແຫວງຫາຄວາມປອດໄພ ແລະ ການປົກປ້ອງ ກໍອາດໃຊ້ການບໍລິການ ຈາກຜູ້ລັກລອບເອົາຄົນເຂົ້າ-ອອກປະເທດກໍໄດ້.
- ຜູ້ລັກລອບເອົາຄົນເຂົ້າ-ອອກປະເທດຄ່ອຍເຊາະເຈືອນຄວາມສາມາດຂອງປະເທດຂອງຕົນໃນການນຄຸ້ມຄອງຊາຍແດນ ແລະ ອໍານາດອະທິປະໄຕຂອງລັດຕົນ.
- ວຽກງານຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ເປັນວຽກງານໜຶ່ງທີ່ຕ້ອງໄດ້ທຸ້ມເທຊັບພະຍາກອນຫຼາຍ ສໍາລັບລັດໜຶ່ງ. ການດໍາເນີນການຄຸ້ມຄອງຊາຍແດນ ແລະ ກັກຂັງ, ການຊອກຫາ ແລະ ການຊ່ວຍເຫຼືອ, ການສົ່ງກັບຄືນປະເທດ ຮຽກຮ້ອງງົບປະມານທີ່ຫຼວງຫຼາຍ.
- ການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ຊ່ອງຫວ່າງທີ່ຂຶ້ນມາພ້ອມໆກັນນັ້ນ ເຮັດໃຫ້ເກີດປັດໄຈທີ່ສໍາຄັນເປັນເຊື້ອເພີງຢ່າງດີໃຫ້ແກ່ການຄ້າມະນຸດ ໃນຕະຫຼອດພາກພື້ນBali Process (ບາລີ ໂປຣເຊສ໌).

ສໍາລັບ ບັນດາລັດ ເພື່ອຍຸດຕິຂະບວນການລັກລອບເອົາຄົນເຂົ້າ-ອອກປະເທດຢ່າງມີປະສິດທິຜົນ, ມີຄວາມຈໍາເປັນທີ່ສຸດທີ່ຕ້ອງກໍານົດໃຫ້ການກະທໍານີ້ເປັນການກະທໍາຜິດທາງອາຍາໃນກົດໝາຍພາຍໃນຂອງຕົນ, ໂດຍສອດຄ່ອງກັບບັນດາພັນທະທາງດ້ານກົດໝາຍຂອງສາກົນ.

### 1.2. ນິຕິກໍາສາກົນ ທີ່ສໍາຄັນ

ມີນິຕິກໍາສາກົນຫຼັກສອງສະບັບທີ່ກ່ຽວຂ້ອງໂດຍກົງກັບການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ: ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ໂດຍທາງບົກ, ທະເລ ແລະ ອາກາດ, ທີ່ເປັນເອກະສານເພີ່ມເຕີມໃຫ້ແກ່ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ)[1]

1 ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ບໍ່ແມ່ນນິຕິກໍາດຽວສະເພາະ. ສົນທິສັນຍາດັດປັບບັນຫາສະເພາະທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດ ຊຶ່ງເປັນພາກສ່ວນໜຶ່ງຂອງກອບການຮ່ວມມືໃນການຕ້ານອາຊະຍາກໍາຂ້າມຊາດຕາມສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ. ບັນດາລັດທີ່ເປັນພາຄີອະນຸສັນຍາສະບັບນີ້ ຕ້ອງເປັນພາຄີຂອງສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງເສຍກ່ອນ, ຊຶ່ງນີ້ເປັນເຫດຜົນທີ່ວ່າພາກ 2 ຂອງຄູ່ມືນະໂຍບາຍສະບັບນີ້ກໍານົດກ່ຽວກັບພັນທະເພີ່ມເຕີມພາຍໃຕ້ສົນທິສັນຍາດັ່ງກ່າວ.



ອະນຸສັນຍາສະບັບດັ່ງກ່າວເປັນນິຕິກຳຂອງສາກົນຕົ້ນຕໍ ແລະ ເປັນນິຕິກຳສາກົນທີ່ສຳຄັນພື້ນຖານທີ່ສຸດກ່ຽວກັບການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ. ອະນຸສັນຍາສະບັບນີ້ ເລີ່ມຕົ້ນມີຜົນສັກສິດໃນວັນທີ 28 ມັງກອນ 2004.[2]

ອະນຸສັນຍາສະບັບນີ້ ຮຽກຮ້ອງໃຫ້ບັນດາລັດພາຄີ ກຳນົດເອົາການລັກລອບເອົາຄົນເຂົ້າ-ອອກປະເທດ ເປັນການກະທຳຜິດທາງອາຍາຕາມທີ່ໄດ້ກຳນົດໄວ້ໃນອະນຸສັນຍາ

ສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ແມ່ນເປັນນິຕິກຳສາກົນໃນການຕ້ານອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງ ຊຶ່ງມີຜົນສັກສິດໃນ ວັນທີ 29 ກັນຍາ 2003.[3]

ເພື່ອຈະເປັນພາຄີຂອງອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ, ລັດຕ້ອງໄດ້ກາຍເປັນພາຄີຂອງສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງເສຍກ່ອນ.

## 1.3. ການລັກລອບເອົາຄົນເຂົ້າ-ອອກປະເທດແລະການກຳນົດເປັນການກະທຳຜິດທາງອາຍາ

### 1.3.1. ຄວາມໝາຍຂອງຄຳວ່າ "ການລັກລອບເອົາຄົນເຂົ້າ-ອອກປະເທດ"

ຄຳສັບ "ການລັກລອບເອົາຄົນເຂົ້າ-ອອກປະເທດ" ໄດ້ຖືກນິຍາມໄວ້ໃນມາດຕາ 3 (ກ) ແລະ (ຂ) ຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ:

> *"ການລັກລອບເອົາຄົນເຂົ້າ-ອອກປະເທດ" ໝາຍເຖິງ ການຈັດຫາ ເພື່ອສະແຫວງຫາຜົນປະໂຫຍດທາງການເງິນ ຫຼື ຜົນປະໂຫຍດອື່ນໆ ໂດຍທາງກົງ ຫຼື ທາງອ້ອມ ຈາກການເຂົ້າປະເທດຂອງບຸກຄົນໜຶ່ງຢ່າງຜິດກົດໝາຍ ຊຶ່ງບຸກຄົນນັ້ນບໍ່ແມ່ນພົນລະເມືອງ ຫຼື ມີທີ່ຢູ່ຖາວອນໃນປະເທດນັ້ນ.*
>
> *"ການເຂົ້າປະເທດຢ່າງຜິດກົດໝາຍ" ໝາຍເຖິງການຂ້າມຊາຍແດນໂດຍບໍ່ປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂທີ່ຈຳເປັນສຳລັບການເຂົ້າມາຍັງລັດໜຶ່ງຢ່າງຖືກຕ້ອງຕາມກົດໝາຍ.*

ແຜນວາດ 1 ລຸ່ມນີ້ ສະແດງໃຫ້ເຫັນອົງປະກອບຕ່າງໆ ຂອງການລັກລອບເອົາຄົນເຂົ້າ-ອອກປະເທດ

**ແຜນວາດ 1: ອົງປະກອບສຳຄັນຂອງຄຳນິຍາມສາກົນຂອງຄຳ ການລັກລອບເອົາຄົນເຂົ້າ-ອອກປະເທດ**




[2] ໃນວັນທີ 1 ກໍລະກົດ 2014, ມີ 138 ປະເທດ ໄດ້ໃຫ້ສັດຕະຍາບັນ ຕໍ່ອະນຸສັນຍາວ່າການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ. ຖ້າຕ້ອງການກວດເບິ່ງວ່າມີຈັກປະເທດ ແລ້ວທີ່ເຂົ້າຮ່ວມ, ຂໍໃຫ້ເບິ່ງໄດ້ທີ່ http://www.unodc.org/unodc/treaties/CTOC/.

[3] ໃນວັນທີ 1 ກໍລະກົດ 2014, ມີ 179 ປະເທດໄດ້ໃຫ້ສັດຕະຍາບັນ ຕໍ່ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ. ຖ້າຕ້ອງການກວດເບິ່ງວ່າມີຈັກປະເທດແລ້ວທີ່ເຂົ້າຮ່ວມ, ຂໍໃຫ້ເບິ່ງໄດ້ທີ່ http://www.unodc.org/unodc/treaties/CTOC/.

ເມື່ອມີອົງປະກອບຄົບທັງສາມອົງປະກອບຕາມແຜນວາດ 1 ນັ້ນ ຖືວ່າເປັນການກະທຳຜິດທີ່ຄົບຖ້ວນໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ. ບຸກຄົນທີ່ມີສ່ວນຮ່ວມໃນການລັກລອບເອົາຄົນເຂົ້າ-ອອກປະເທດໂດຍຕັ້ງໃຈ ບໍ່ວ່າໃນທາງກົງ ຫຼື ທາງອ້ອມ ເອີ້ນວ່າ ຜູ້ລັກລອບ. ບຸກຄົນທີ່ຖືກຊ່ວຍເຫຼືອໂດຍຜູ້ລັກລອບເອົາຄົນເຂົ້າ-ອອກປະເທດ ເອີ້ນວ່າ ຜູ້ຖືກລັກລອບ. ເຖິງແມ່ນວ່າ ຜູ້ລັກລອບ ແລະ ຜູ້ຖືກລັກລອບ ໄດ້ຕົກລົງເປັນສັນຍາໃຫ້ມີການສົ່ງອອກຫຼືເຂົ້າປະເທດຢ່າງຜິດກົດໝາຍກໍຕາມ, ຈຸດປະສົງຂອງອະນຸສັນຍາບໍ່ໄດ້ມີເປົ້າໝາຍແນໃສ່ການເຂົ້າ-ອອກປະເທດຢ່າງຜິດກົດໝາຍແບບທົ່ວໄປ, ແຕ່ແນໃສ່ ຕໍ່ຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດທີ່ມີການຈັດຕັ້ງຂອງກຸ່ມອາຊະຍາກອນເປັນຜູ້ກະທຳ.

### 1.3.2. ການກະທຳຜິດໃນສະຖານການເອົາຄົນເຂົ້າ-ອອກປະເທດ-ການດຳເນີນການໃຫ້ເຂົ້າປະເທດຢ່າງຜິດກົດໝາຍ

ອີງຕາມນິຍາມຄຳສັບໃນມາດຕາ 3 ຂອງອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ, ການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ ຕ້ອງປະກອບດ້ວຍສາມອົງປະກອບຂ້າງເທິງນັ້ນ. ຈຸດປະສົງຂອງການກະທຳຜິດສະຖານນີ້ແມ່ນ ການຈັດຫາ ຫຼື ການດຳເນີນການໃຫ້ມີ (ການອຳນວຍຄວາມສະດວກ) ການເຂົ້າປະເທດຢ່າງຜິດກົດໝາຍ, ບໍ່ແມ່ນກະໂຕພຶດຕິກຳການເຂົ້າປະເທດຢ່າງຜິດກົດໝາຍ.

ການເຂົ້າປະເທດຢ່າງຜິດກົດໝາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3(ຂ) ຂອງອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດແມ່ນ "ຂ້າມຊາຍແດນໂດຍບໍ່ປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂທີ່ຈຳເປັນສຳລັບການເຂົ້າລັດໜຶ່ງ". ຕົວຢ່າງ ການອຳນວຍຄວາມສະດວກໃຫ້ຜູ້ໃດຜູ້ໜຶ່ງເຂົ້າມາຍັງປະເທດໜຶ່ງ ໂດຍທີ່ຜູ້ນັ້ນບໍ່ມີວິຊາເຂົ້າຢ່າງຖືກຕ້ອງ ຫຼື ເອກະສານສະບັບອື່ນໆທີ່ອອກໂດຍລັດສຳລັບການເຂົ້າ-ອອກປະເທດ.

ອົງປະກອບຂອງ "ຜົນປະໂຫຍດທາງດ້ານການເງິນ ຫຼື ຜົນປະໂຫຍດອື່ນໆ" ໄດ້ຖືກຕີຄວາມໝາຍໄປໃນທາງທີ່ກວ້າງຂວາງ. ຕົວຢ່າງ, ຜົນປະໂຫຍດອາດກວມການນຳໃຊ້ການຊັກຊວນ, ການຈູງໃຈ, ການຈອບອອຍ ທີ່ຜົນປະໂຫຍດນັ້ນບໍ່ມີລັກສະນະທາງການເງິນ (ເຊັ່ນ: ການໄດ້ປຽບອັນໜຶ່ງ, ສິດທິພິເສດອັນໜຶ່ງ, ການບໍລິການທາງເພດ ຫຼື ຮູບການອື່ນໆ) ທີ່ເກີດມາຈາກການລັກລອບເອົາຄົນເຂົ້າ-ອອກປະເທດ.

### 1.3.3. ການກະທຳຜິດໃນສະຖານການຊ່ວຍເຫຼືອໃຫ້ມີທີ່ຢູ່ອາໄສຢ່າງຜິດກົດໝາຍ

ແຕ່ການກະທຳຜິດທີ່ຊ່ວຍໃຫ້ມີການຢູ່ອາໄສຢ່າງຜິດກົດໝາຍ ພົວພັນເຖິງການຈັດຫາໃຫ້ມີການຢູ່ອາໄສໃນປະເທດໜຶ່ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ. ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ຮຽກຮ້ອງໃຫ້ລັດພາຄີ ໄດ້ກຳນົດການກະທຳທີ່ເປັນການຊ່ວຍເຫຼືອໃຫ້ມີການຢູ່ອາໄສຢ່າງຜິດກົດໝາຍເພື່ອຜົນປະໂຫຍດ ເປັນການກະທຳຜິດທາງອາຍາ (ມາດຕາ 6.1 (ຄ)).

ການກະທຳຜິດໃນສະຖານ "ການຊ່ວຍໃຫ້ມີການຢູ່ອາໄສຢ່າງຜິດກົດໝາຍ" ປະກອບດ້ວຍອົງປະກອບດັ່ງຕໍ່ໄປນີ້:

- ຊ່ວຍໃຫ້ບຸກຄົນໜຶ່ງຍັງຢູ່ໃນລັ
- ຊຶ່ງບຸກຄົນນັ້ນບໍ່ແມ່ນພົນລະເມືອງ ຫຼື ມີທີ່ຢູ່ຖາວອນໃນລັດນັ້ນ ແລະ ບຸກຄົນນັ້ນ ບໍ່ໄດ້ປະຕິບັດຕາມເງື່ອນໄຂທີ່ຖືກຕ້ອງຕາມກົດ
  ໝາຍໃນການອາໄສຢູ່ໃນລັດນັ້ນ;
- ເພື່ອໃຫ້ໄດ້ຜົນປະໂຫຍດທາງການເງິນ ຫຼື ຜົນປະໂຫຍດອື່ນໆ ໃນທາງກົງ ຫຼື ທາງອ້ອມ; ແລະ
- ກະທຳໂດຍເຈດຕະນາ.

ການກະທຳຜິດໃນສະຖານການຊ່ວຍໃຫ້ມີການຢູ່ອາໄສຢ່າງຜິດກົດໝາຍ ເກີດຂຶ້ນໃນເວລາທີ່ມີການຊ່ວຍເຫຼືອຜູ້ຖືກລັກລອບໃຫ້ສາມາດເຂົ້າມາຍັງລັດໜຶ່ງໂດຍຖືກຕ້ອງຕາມກົດໝາຍ, ແຕ່ເປັນການນຳໃຊ້ວິທີການທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອຊ່ວຍໃຫ້ຜູ້ຖືກລັກລອບນັ້ນສາມາດອາໄສຢູ່ໃນລັດນັ້ນ. ຕົວຢ່າງ, ຜູ້ລັກລອບຈັດຫາວິຊາທີ່ຖືກຕ້ອງ ເຊັ່ນ ວິຊາດຳເນີນທຸລະກິດຊົ່ວຄາວ ຫຼື ການບໍລິການອື່ນໆທີ່ກ່ຽວຂ້ອງກັບວິຊາໃຫ້ຜູ້ຖືກລັກລອບ ແຕ່ບົນພື້ນຖານຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງຮູ້ດີວ່າ ຜູ້ຖືກລັກລອບເຫຼົ່ານີ້ເຈດຕະນາຈະຢູ່ປະເທດທີ່ຕ້ອງການຢ່າງຖາວອນ. ຜູ້ລັກລອບ ສ້າງກຳໄລຢ່າງມະຫາສານຈາກຜູ້ຖືກລັກລອບສຳລັບການບໍລິການນີ້.

### 1.3.4. ການກະທຳຜິດກ່ຽວກັບເອກະສານ

ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ຮຽກຮ້ອງໃຫ້ລັດພາຄີ ໄດ້ອອກກົດໝາຍກຳນົດການປອມແປງເອກະສານ ເປັນການກະທຳຜິດທາງອາຍາ 6.1.(ຂ). ໂດຍສະເພາະ, ລັດພາຄີຕ້ອງກຳນົດການຜະລິດ, ການຈັດຫາ, ການສະໜອງ ຫຼື ການຄອບຄອງ ເອກະສານເດີນທາງ ຫຼື ບັດປະຈຳຕົວທີ່ບໍ່ຖືກຕ້ອງ ເພື່ອຈຸດປະສົງຂອງການລັກລອບເອົາຄົນເຂົ້າ-ອອກປະເທດເປັນການກະທຳຜິດທາງອາຍາ.

ການກະທຳຜິດໃນສະຖານທີ່ກ່ຽວກັບເອກະສານແມ່ນມີຜົນປະໂຫຍດຫຼາຍໃນການຕໍ່ຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ຍ້ອນວ່າມັນຊ່ວຍໃຫ້ການຮ້ອງຟ້ອງດຳເນີນຄະດີຕໍ່ຜູ້ທີ່ມີບົດບາດສຳຄັນໃນຕາໜ່າງການລັກລອບເອົາຄົນເຂົ້າ-ອອກປະເທດ, ຊຶ່ງແມ່ນຜູ້ທີ່ບໍ່ໄດ້ມີສ່ວນກ່ຽວຂ້ອງໂດຍກົງ ກັບການກະທຳຜິດຕົວຈິງໃນການຈັດສົ່ງຜູ້ຖືກລັກລອບ ຂ້າມຊາຍແດນຢ່າງຜິດກົດໝາຍ.

## **ຂໍ້ຄິດເຫັນ:** ມີກົດໝາຍກ່ຽວກັບການເຂົ້າ-ອອກປະເທດແລ້ວ ຍັງບໍ່ພຽງພໍ

ກົດໝາຍ ກ່ຽວກັບການເຂົ້າ-ອອກປະເທດ ຊຶ່ງກ່ຽວຂ້ອງກັບການເຂົ້າ-ອອກເມືອງຢ່າງຜິດກົດໝາຍເທົ່ານັ້ນ ອາດຈະບໍ່ພຽງພໍໃນການເຮັດໃຫ້ພຶດຕິກຳການລັກລອກເອົາຄົນເຂົ້າ-ອອກປະເທດເປັນການກະທຳຜິດທາງອາຍາ. ປະເທດຕ່າງໆ ຍັງຕ້ອງໄດ້ສ້າງກົດໝາຍທີ່ກ່ຽວຂ້ອງດັ່ງກ່າວ ຢ່າງລະອຽດຄົບຖ້ວນແຍກຕ່າງຫາກ, ຊຶ່ງແນໃສ່ການເຄື່ອນໄຫວທີ່ເກີດຂຶ້ນຢູ່ນອກປະເທດ

ການກະທຳຜິດກ່ຽວກັບການລັກລອບທີ່ລະອຽດຮັດກຸມຈະເຮັດໃຫ້ສາມາດຮ້ອງຟ້ອງຄະດີອາຍາຕໍ່ຜູ້ກະທຳຜິດໃນເຫດການສົມມຸດທີ່ສະແດງໃນແຜນວາດ 2 ລຸ່ມນີ້: ການຈັດຕັ້ງ ການດຳເນີນການລັກລອບໃຫ້ອອກໄປປະເທດໜຶ່ງຢ່າງຖືກກົດໝາຍ (ປະເທດ ກ), ການຜ່ານອີກປະເທດໜຶ່ງ (ປະເທດ ຂ) ຢ່າງຖືກຕ້ອງຕາມກົດໝາຍ, ເພື່ອເຮັດໃຫ້ໄປເຖິງອີກປະເທດໜຶ່ງ (ປະເທດ ຄ) ຢ່າງຜິດກົດໝາຍ. ໝາຍເຫດ: ສະຖານະການທີ່ສະເໜີນີ້ພົວພັນເຖິງການນຳໃຊ້ສິດອຳນາດສານ ທີ່ອະນຸຍາດໃຫ້ດຳເນີນການ ພາຍໃຕ້ ສົນທິສັນຍາຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (ອະທິບາຍຕື່ມຕາມພາຍຫຼັງໃນພາກນີ້).

**ແຜນວາດ 2: ຄວາມຈຳເປັນໃນການກຳນົດການກະທຳຜິດກ່ຽວກັບການລັກລອບ ຢ່າງຮັດກຸມຮອບຄອບ**




ຄຳສັບ “ເອກະສານເດີນທາງ ຫຼື ບັດປະຈຳຕົວທີ່ບໍ່ຖືກຕ້ອງ” ແມ່ນໃຊ້ໄດ້ກັບທຸກປະເພດເອກະສານລັກສະນະດຽວກັນທີ່ອອກໂດຍລັດໃດໜຶ່ງ ເຊັ່ນ ໜັງສືເດີນທາງ, ວີຊາ, ແລະ ບັດປະຈຳຕົວຮູບແບບໃດກໍຕາມ. ຄຳສັບນີ້ ໄດ້ຖືກກຳນົດຂຶ້ນຢ່າງມີເນື້ອໃນກວ້າງຂວາງ ແລະ ລວມເອົາທຸກເອກະສານ ທີ່ເຮັດຂຶ້ນດ້ວຍການປອມແປງ ຫຼື ສ້າງຂຶ້ນຢ່າງຜິດກົດໝາຍ, ແລະທັງເອກະສານທີ່ຖືກຕ້ອງແຕ່ຖືກນຳໃຊ້ຢ່າງບໍ່ຖືກຕ້ອງ ຫຼື ໄດ້ມາ ຈາກການຕົວະຍົວະຫຼອກລວງ, ການສໍ້ລາດບັງຫຼວງ ຫຼື

ຖ້າປະເທດ ກ ມີພຽງແຕ່ກົດໝາຍກ່ຽວກັບການເຂົ້າ-ອອກເມືອງ, ກົດໝາຍກໍບໍ່ສາມາດດັດປັບສາຍພົວພັນທີ່ມີຢູ່ທັງໝົດ.

ເຖິງຢ່າງໃດກໍຕາມ, ຖ້າປະເທດ ກ ໄດ້ມີກົດໝາຍກ່ຽວກັບການລັກລອບທີ່ເປັນລະບົບຄົບຊຸດ ກໍຈະສາມາດຮ້ອງຟ້ອງຜູ້ກະທຳຜິດໄດ້ຕໍ່ການກະທຳ ທີ່ເກີດຂຶ້ນຢູ່ປະເທດຕົ້ນທາງ, ປະເທດ ກ. ໝາຍເຫດ ໃນບາງກໍລະນີການລັກລອບອາດຈະຜ່ານຫຼາຍປະເທດ.

**ຍ້ອນແນວນີ້ ກົດໝາຍສາມັນທົ່ວໄປພຽງຢ່າງດຽວ ຈຶ່ງບໍ່ພຽງພໍ ໃນການດັດປັບທຸກຮູບແບບ ແລະ ຮູບການຂອງການກະທຳຜິດທີ່ສະຫຼັບຊັບຊ້ອນ ນີ້. ຫຼາຍປະເທດຈຳເປັນຕ້ອງໄດ້ກຳນົດຄວາມຜິດກ່ຽວກັບການລັກລອບ ໂດຍເລັງໃສ່ການຈັດຫາ–ການດຳເນີນການກ່ຽວກັບການເຂົ້າເມືອງຢ່າງຜິດ ກົດໝາຍ, ບໍ່ພຽງແຕ່ກຳນົດການເຂົ້າ–ອອກປະເທດຢ່າງຜິດກົດໝາຍເປັນການກະທຳຜິດທາງອາຍາເທົ່ານັ້ນ.**

### 1.3.5. ການຂະຫຍາຍຂອບເຂດຄວາມຮັບຜິດຊອບທາງອາຍາ

ມາດຕາ 6(2) ຂອງອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ຮຽກຮ້ອງໃຫ້ຂະຫຍາຍຂອບເຂດຄວາມຮັບຜິດຊອບທາງອ

- ຄວາມພະຍາຍາມກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ (ຂຶ້ນກັບລະບົບກົດໝາຍຂອງລັດ);
- ການມີສ່ວນຮ່ວມ ດ້ວຍການສົມຮູ້ຮ່ວມຄິດໃນການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ; ແລະ
- ດຳເນີນການ ຫຼື ຊີ້ນຳໃຫ້ຜູ້ອື່ນກະທຳຜິດໃນສະຖານດັ່ງກ່າວ.

ມາດຕາ 5(1)(ກ) ຂອງສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ ຍັງຮຽກຮ້ອງໃຫ້ບັນດາລັດພາຄີກຳນົດການມີສ່ວນຮ່ວມໃນກຸ່ມຄົນໃນການກະທຳຜິດ ກໍເປັນການກະທຳຜິດທາງອາຍາເຊັ່ນດຽວກັນ. ຫຼາຍລັດອາດຈັດຕັ້ງປະຕິບັດຂໍ້ຮຽກຮ້ອງນີ້ ໂດຍກຳນົດເອົາການສົມຮູ້ຮ່ວມຄິດກະທຳຜິດໃຫ້ເປັນການກະທຳຜິດ ຫຼື ໂດຍກຳນົດການມີສ່ວນພົວພັນກັບກຸ່ມທີ່ກະທຳຜິດ ຫຼືການມີສ່ວນເຂົ້າຮ່ວມໃນກຸ່ມໃຫ້ເປັນການກະທຳຜິດ.

ການຂະຫຍາຍຂອບເຂດຄວາມຮັບຜິດຊອບທາງອາຍາ ຕໍ່ກັບທຸກຄົນ ທີ່ມີສ່ວນກ່ຽວຂ້ອງກັບການເຄື່ອນໄຫວການລັກລອບເອົາຄົນເຂົ້າ-ອອກປະເທດ ແມ່ນມີຄວາມຈຳເປັນຫຼາຍ ໂດຍສະເພາະ ກັບຂະບວນການລັກລອບເອົາຄົນເຂົ້າ-ອອກປະເທດ ທີ່ມີຄວາມ ສະຫຼັບຊັບຊ້ອນທີ່ດຳເນີນໂດຍຫຼາຍຄົນທີ່ມີໜ້າທີ່ຮັບຜິດຊອບສະເພາະຂອງຕົນ ຊຶ່ງສ່ວນຫຼາຍຈະຢູ່ໃນຂອບເຂດສິດອຳນາດສານທີ່ແຕກຕ່າງກັນ. ການຂະຫຍາຍຂອບເຂດຄວາມຮັບຜິດຊອບທາງອາຍາຕໍ່ທຸກຄົນ ຍັງຮັບປະກັນວ່າຄວາມພະຍາຍາມໃນການລັກລອບເອົາຄົນເຂົ້າ-ອອກປະເທດ ເຖິງແມ່ນວ່າຈະບໍ່ສຳເລັດກໍຕາມ ກໍຍັງຈະຖືກຮ້ອງຟ້ອງດຳເນີນຄະດີອາຍາໄດ້. ຕົວຢ່າງ, ປະເທດໜຶ່ງ ອາດພະຍາຍາມຮ້ອງຟ້ອງໃນສະຖານພະຍາຍາມກະທຳຜິດ, ຈັດຕັ້ງ/ຊີ້ນຳ, ແລະ ສົມຮູ້ຄວາມຄິດ ພາຍໃຕ້ບົດບັນຍັດຂອງກົດໝາຍຕ້ານການລັກລອບສະເພາະ ຫຼື ໂດຍການກຳນົດໄວ້ໃນປະມວນກົດໝາຍອາຍາ, ບົດບັນຍັດທົ່ວໄປຂອງຄວາມຮັບຜິດຊອບທາງອາຍາ ທີ່ສາມາດນຳໃຊ້ໄດ້ກັບທຸກການກະທຳຜິດໃນປະເທດນັ້ນ.

[4] ຫຼັກການຫ້າມຍູ້ດັນກັບຄືນ (Non-refoulement) ແມ່ນຫຼັກການສຳຄັນຂອງກົດໝາຍສາກົນ ທີ່ປົກປ້ອງບຸກຄົນຈາກການຖືກສົ່ງໄປດິນແດນປະເທດອື່ນບໍ່ວ່າດ້ວຍຮູບການໃດກໍຕາມ ທີ່ອາດເປັນໄພຂົ່ມຂູ່ຕໍ່ຊີວິດ ແລະ ເສລີພາບຂອງເຂົາເຈົ້າ.

[5] ມາດຕາ 31 ຂອງສົນທິສັນຍາວ່າດ້ວຍຜູ້ລີ້ໄພກຳນົດວ່າ: “ບັນດາລັດພາຄີບໍ່ຄວນລົງໂທດ ໃນສະຖານການເຂົ້າເມືອງຜິດກົດໝາຍ ຫຼື ການລີ້ໄພຜູ້ທີ່ມາຈາກດິນແດນ ທີ່ອາດເປັນໄພຂົ່ມຂູ່ຕໍ່ຊີວິດ ແລະ ເສລີພາບຂອງເຂົາເຈົ້າ... ການເຂົ້າມາ ຫຼື ການມີໜ້າຢູ່ໃນດິນແດນໂດຍປາສະຈາກການໄດ້ຮັບອະນຸຍາດ, ແລະ ລັດພາຄີຄວນໃຫ້ເຂົາເຈົ້າໄດ້ສະແດງສະຖານະຂອງຕົນຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍບໍ່ຊັກຊ້າ ແລະ ໃຫ້ເຂົາເຈົ້າສະເໜີສາເຫດທີ່ພາໃຫ້ເຂົາເຈົ້າເຂົ້າເມືອງ ຫຼື ມີໜ້າຢູ່ຢ່າງຜິດກົດໝາຍ”.

## ຂໍ້ຄິດເຫັນ: ການບໍ່ກຳນົດການກະທຳຜິດທາງອາຍາ ໃສ່ຜູ້ຖືກລັກລອບ

ມາດຕາ 5 ຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ ເວົ້າວ່າ ຜູ້ຖືກລັກລອບບໍ່ຄວນຖືກຮ້ອງຟ້ອງຄະດີອາຍາ ຍ້ອນວ່າລາວຖືກລັກລອບ. ມາດຕາ 19 ກຳນົດວ່າ ບໍ່ມີບົດບັນຍັດໃນໃນອະນຸສັນຍາທີ່ແຕະຕ້ອງສິດທິ, ພັນທະ ແລະ ຄວາມຮັບຜິດຊອບຕ່າງໆຂອງລັດພາຄີ ແລະ ບຸກຄົນ ພາຍໃຕ້ກົດໝາຍສາກົນ.

ຈຸດປະສົງຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ ບໍ່ແມ່ນການກຳນົດການກະທຳຜິດທາງອາຍາໃສ່ຜູ້ຖືກລັກລອບ, ແຕ່ອະນຸສັນຍາ ກໍບໍ່ໄດ້ສະກັດກັ້ນລັດພາຄີຈາກການນຳໃຊ້ມາດຕະການຕໍ່ຜູ້ທີ່ກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ ພາຍໃຕ້ກົດໝາຍພາຍໃນຂອງຕົນເອງ (ມາດຕາ 6(4), ຂອງອະນຸສັນຍາ). ບັນດາມາດຕະການເຫຼົ່ານີ້ຕ້ອງສອດຄ່ອງກັບ ສິດທິ ພັນທະ ແລະ ຄວາມຮັບຜິດຊອບຂອງລັດ ແລະ ຂອງບຸກຄົນພາຍໃຕ້ກົດໝາຍສາກົນ ລວມທັງກົດໝາຍມະນຸດສະທຳສາກົນ ແລະ ສິດທິມະນຸດສາກົນ, ໂດຍສະເພາະ ເມື່ອໃດທີ່ມີເງື່ອນໄຂ, ສົນທິສັນຍາ ແລະ ອະນຸສັນຍາທີ່ກ່ຽວຂ້ອງເຖິງສະຖານະຂອງຜູ້ລີ້ໄພ ແລະ ຫຼັກການບໍ່ຍູ້ດັນສົ່ງກັບຄືນ 4 (ເບິ່ງມາດຕາ 19, ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ).5 ຕົວຢ່າງ, ການເຂົ້າປະເທດຢ່າງຜິດກົດໝາຍບໍ່ແຕະຕ້ອງເຖິງສິດໃນການຂໍລີ້ໄພ.

ບັນຫາສຳຄັນ ເມື່ອມີການພັດທະນາກົດໝາຍພາຍໃນ ແມ່ນ ຈຸດສຸມຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດແມ່ນການຕໍ່ຕ້ານກັບການລັກລອບດັ່ງກ່າວນີ້. ສະນັ້ນອະນຸສັນຍາຈຶ່ງບໍ່ໄດ້ແນ່ໃສ່ລົງໂທດຜູ້ທີ່ຖືກລັກລອບ.

## ຂໍ້ຄິດເຫັນ: ການປົກປ້ອງພະຍານໃນຄະດີການລັກລອບ ເອົາຄົນເຂົ້າ-ອອກປະເທດ

ພາຍໃຕ້ມາດຕາ 24 ຂອງສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ, ແຕ່ລະລັດກຳນົດມາດຕະການຕ່າງໆທີ່ສອດຄ່ອງກັບວິທີການທີ່ສະໜອງການປົກປ້ອງຢ່າງມີປະສິດທິຜົນຈາກຄວາມເປັນໄປໄດ້ທີ່ອາດຖືກຕອບໂຕ້ ຫຼື ການຂົ່ມຂູ່ພະຍານໃນຂະບວນການດຳເນີນຄະດີອາຍາ ຊຶ່ງເປັນຜູ້ທີ່ຈະໃຫ້ການກ່ຽວຂ້ອງກັບການກະທຳຜິດ ທີ່ ກຳນົດໄວ້ໃນສົນທິສັນຍາ, ແລະ ຕາມທີ່ເຫັນວ່າເໝາະສົມ ປົກປ້ອງຍາດພີ່ນ້ອງຂອງພວກກ່ຽວ ແລະ ຜູ້ອື່ນທີ່ໃກ້ຊິດກັບເຂົາເຈົ້າ

### 1.3.6. ສາເຫດທີ່ພາໃຫ້ເພີ່ມຄວາມ

ອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ ຮຽກຮ້ອງໃຫ້ບັນດາລັດ ກຳນົດສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ ຕໍ່ຜູ້ລັກລອບ ຊຶ່ງອາດຖືກຮ້ອງຟ້ອງດຳເນີນຄະດີໃນສະຖານຢູ່ອາໄສຢູ່ຢ່າງຜິດກົດໝາຍ ແລະ ການປອມແປງເອກະສານ (ມາດຕາ 6(3)).



ສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ ແມ່ນສະພາບທີ່ຜູ້ກະທຳຜິດ ດຳເນີນການທີ່ເປັນອັນຕະລາຍ ຫຼື ຈະເປັນອັນຕະລາຍຕໍ່ຊີວິດ ຫຼື ຄວາມປອດໄພຂອງຜູ້ຖືກລັກລອບ ຫຼື ການປະຕິບັດທີ່ເປັນການໄຮ້ມະນຸດສະທຳ ຫຼື ດູໝິ່ນສັກສີຄວາມເປັນມະນຸດ, ລວມທັງການກິດຂີ່ຂູດຮີດ. ເມື່ອໃດທີ່ມີຄວາມສອດຄ່ອງກັບກົດໝາຍພາຍໃນຂອງປະເທດ, ສະພາບທີ່ເປັນການເພີ່ມຄວາມຮັບຜິດຊອບທາງອາຍາຍັງຄວນຖືກນຳໃຊ້ໃນກໍລະນີທີ່ມີການສົມຮູ້ຮ່ວມຄິດ, ການຈັດຫາ ຫຼື ການຊີ້ນຳ ໃຫ້ມີການລັກລອບ ຫຼື ການກະທຳຜິດສະຖານອື່ນໆທີ່ກ່ຽວຂ້ອງ. ຈິດໃຈຂອງການກຳນົດສະພາບທີ່ເປັນການເພີ່ມຄວາມຮັບຜິດຊອບທາງອາຍາໃຫ້ເປັນພັນທະນີ້ ຍ້ອນວ່າ ບັນດາລັດພາຄີຕ້ອງຮັບປະກັນວ່າ ບັນດາຜູ້ກະທຳຜິດຈະໄດ້ຮັບໂທດໜັກກວ່າເກົ່າ ຖ້າຫາກເຂົາເຈົ້າສ້າງສະພາບດັ່ງກ່າວ.

## 1.4. ວ່າດ້ວຍໂທດ

ການລັກລອບເອົາຄົນເຂົ້າ-ອອກປະເທດ ສາມາດເຮັດໃຫ້ຜູ້ທີ່ອ່ອນແອຕົກເປັນເຫຍື່ອໄດ້ງ່າຍ ຕົກຢູ່ໃນອັນຕະລາຍຕໍ່ຊີວິດຂອງເຂົາເຈົ້າ ແລະ ເຮັດໃຫ້ເຂົາເຈົ້າເຂົ້າໄປຢູ່ໃນເງື່ອນໄຂທີ່ຖືກປະຕິບັດຢ່າງໄຮ້ມະນຸດສະທຳ. ເພື່ອຕ້ານກັບການລັກລອບຢ່າງມີປະສິດທິຜົນ, ບັນດາລັດ ຈຳຕ້ອງຮັບປະກັນວ່າ ໄດ້ມີການກຳນົດໂທດຢ່າງໜັກໜ່ວງໃສ່ການກະທຳຜິດປະເພດນີ້ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ.

ຕົວຢ່າງ, ໄດ້ມີລັດພາຄີຈຳນວນໜຶ່ງ ກຳນົດໂທດຕັດອິດສະຫຼະພາບ ສູງສຸດ 10 ປີສຳລັບການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ, ສ່ວນການກະທຳຜິດໃນສະຖານສ້າງສະພາບທີ່ເພີ່ມຄວາມຮັບຜິດຊອບທາງອາຍາແມ່ນອາດຖືກລົງໂທດຕັດອິດສະຫຼະພາບສູງສຸດ 20 ປີ.

### **ຂໍ້ຄິດເຫັນ:** ສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ

ມີສອງວິທີ ທີ່ປະເທດຕ່າງໆ ໃຊ້ໃນການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດຢ່າງຜິດກົດໝາຍ. ວິທີທີໜຶ່ງແມ່ນກຳນົດສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍສະເພາະ - ຊຶ່ງແມ່ນ ການກຳນົດການກະທຳຜິດສະຖານນີ້ແຍກອອກເປັນອັນສະເພາະພິເສດ ຊຶ່ງລວມເອົາທັງເງື່ອນໄຂດ້ານອົງປະກອບຂອງການກະທຳຜິດທີ່ພາໃຫ້ມີການເພີ່ມໂທດທາງອາຍາ.

ສາເຫດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາເປັນສະເພາະພິເສດນີ້ ແຍກອອກເພື່ອເຮັດໃຫ້ເຫັນລະດັບໂທດທາງອາຍາ

ທີ່ໜັກກວ່າ ໂທດອາຍາຕົ້ນຕໍສຳລັບການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ.

ອີກທາງເລືອກໜຶ່ງ ແມ່ນສ້າງບົດບັນຍັດທີ່ແຍກກັນລະຫວ່າງໂທດຕົ້ນຕໍ ແລະ ໂທດທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ ຊຶ່ງເມື່ອສາມາດພິສູດການກະທຳຜິດແລ້ວ, ກໍສາມາດວາງໂທດໃສ່ການກະທຳຜິດໂດຍເບິ່ງໂທດຕົ້ນຕໍ ແລະ ສາເຫດທີ່ພາໃຫ້ເພີ່ມໂທດ.

ທັງສອງວິທີນີ້ຈະຮັບປະກັນວ່າ ການດຳເນີນການລັກລອບເອົາຄົນເຂົ້າ-ອອກປະເທດ ໄດ້ຖືກນຳມາພິຈາລະນາເປັນສາເຫດທີ່ພາໃຫ້ມີການເພີ່ມໂທດ ໃນກໍລະນີທີ່ການກະທຳຜິດທີ່ຮ້າຍແຮງ ເພື່ອໃຫ້ສາມາດກຳນົດໂທດທີ່ສູງກວ່າຮ້າຍແຮງກວ່າໄດ້ຢ່າງສອດຄ່ອງ.

## 1.5. ຄວາມແຕກຕ່າງລະຫວ່າງການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ

ການຄ້າມະນຸດແຕກຕ່າງຈາກການລັກລອບເອົາຄົນເຂົ້າ-ອອກປະເທດ ອະທິບາຍໃນຕາຕະລາງ 1 ລຸ່ມນີ້. ສະນັ້ນ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງຮັບປະກັນວ່າ ນິຍາມຄຳສັບ “ການຄ້າມະນຸດ” ແລະ “ການລັກລອບເອົາຄົນເຂົ້າ-ອອກປະເທດ” ໄດ້ເຂົ້າໃຈຢ່າງຖືກຕ້ອງ ແລະ ຖືກກຳນົດໄວ້ໃນກົດໝາຍພາຍໃນປະເທດ.

**ຕາຕະລາງ 1. ຄວາມແຕກຕ່າງລະຫວ່າງການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຄ້າມະນຸດ**

| | ການຄ້າມະນຸດ | ການລັກລອບເອົາຄົນເຂົ້າ-ອອກປະເທດ |
|---|---|---|
| **ຈຸດປະສົງຂອງການກໍ່ອາຊະຍາກຳ** | ຈຸດປະສົງຂອງການຄ້າມະນຸດແມ່ນການກົດຂີ່ຂູດຮີດຢູ່ສະເໝີ.<br><br>ການກົດຂີ່ຂູດຮີດ ສາມາດເກີດຂຶ້ນໃນຕະຫຼອດລະຍະເວລາຢ່າງບໍ່ມີວັນສິ້ນສຸດ. | ຈຸດປະສົງຂອງການລັກລອບເອົາຄົນເຂົ້າ-ອອກປະເທດ ແມ່ນເພື່ອໃຫ້ໄດ້ຮັບຜົນປະໂຫຍດທາງການເງິນ ຫຼື ຮູບການອື່ນ ໂດຍການຊ່ວຍເຫຼືອໃຫ້ເຂົ້າປະເທດຢ່າງຜິດກົດໝາຍ ຫຼື ອາໄສຢູ່ໃນປະເທດອື່ນຢ່າງຜິດກົດໝາຍ. |
| **ການຍິນຍອມ ແລະ ການຕົກເປັນຜູ້ຖືກເຄາະຮ້າຍ** | ການຍິນຍອມຂອງຜູ້ຖືກຄ້າມະນຸດແມ່ນບໍ່ກ່ຽວຂ້ອງກັບອາຊະຍາກຳ, ຍ້ອນວ່າຖືກບັງຄັບ, ຫຼອກລວງ ຫຼື ຂົ່ມຂູ່ຈາກຜູ້ຄ້າມະນຸດ. | ໂດຍທົ່ວໄປແລ້ວ ຜູ້ຖືກລັກລອບເຫັນດີໃຫ້ຖືກລັກລອບ.6 ຊຶ່ງນີ້ເປັນເຫດຜົນໃຫ້ບໍ່ຖືວ່າເຂົາເຈົ້າ ເປັນ "ຜູ້ຖືກເຄາະຮ້າຍຈາກການລັກລອບ..." ແຕ່ເຂົາເຈົ້າກາຍເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳອື່ນໃນວົງຈອນຂອງການລັກລອບເອົາຄົນເຂົ້າ-ອອກປະເທດ. ຕົວຢ່າງ, ອາດມີການນຳໃຊ້ຄວາມຮຸນແຮງກັບຜູ້ຖືກລັກລອບ, ຫຼື ຊີວິດຂອງຜູ້ຖືກລັກລອບອາດຕົກຢູ່ໃນອັນຕະລາຍ ຢູ່ໃນມືຜູ້ລັກລອບ.[7] |
| **Transnational** | ທັງພາຍໃນປະເທດ ແລະ ທັງຂ້າມຊາຍແດນ. | ຂ້າມຊາຍແດນ. |
| **Source of profit** | ໂດຍຜ່ານການກົດຂີ່ຂູດຮີດ ຜູ້ຖືກຄ້າມະນຸດ. | ໂດຍຜ່ານຜົນປະໂຫຍດທາງການເງິນ ຫຼື ວັດຖຸສິ່ງຂອງ ເພື່ອຊ່ວຍເຫຼືອໃຫ້ເຂົ້າ ຫຼື ອາໄສຢູ່ປະເທດອື່ນຢ່າງຜິດກົດໝາຍ. |

ໃນພາກປະຕິບັດຕົວຈິງ, ອາດຈະມີຄວາມຫຍຸ້ງຍາກໃນການຈຳແນກຄວາມແຕກຕ່າງລະຫວ່າງການຄ້າມະນຸດ ແລະ ການລັກລອບເອົາຄົນເຂົ້າ-ອອກປະເທດ. ຕົວຢ່າງ, ຜູ້ຖືກຄ້າມະນຸດອາດຈະກາຍເປັນຜູ້ຖືກລັກລອບ ໃນລະຫວ່າງການເດີນທາງຈາກຈຸດໜຶ່ງໄປຫາຈຸດໜຶ່ງ. ລາວອາດຕິດຕໍ່ຜູ້ໃດຜູ້ໜຶ່ງ ຫຼື ກຸ່ມໃດໜຶ່ງ ໃຫ້ຊ່ວຍເຫຼືອເຂົ້າປະເທດໜຶ່ງຢ່າງຜິດກົດໝາຍ ແລະ ຈ່າຍເງິນເພື່ອສິ່ງນັ້ນເປັນການຕອບແທນ. ເຖິງຢ່າງໃດກໍຕາມ, ຜູ້ຖືກລັກລອບອາດຖືກເຮັດໃຫ້ກາຍເປັນໜີ້ (ໂດຍຜ່ານການນຳໃຊ້ການບັງຄັບນາບຂູ່, ຂົ່ມຂູ່ ຫຼື ຫຼອກລວງ) ຢ່າງໜັກໜ່ວງ ແລະ ຕ້ອງໄດ້ຈ່າຍ "ຄ່າສິ້ນເປືອງ" (ດ້ວຍເງິນ ຫຼື ຮູບການອື່ນ) ໃຫ້ແກ່ນາຍໜ້າ ຫຼື ຜູ້ລັກລອບ, ຫຼື ກາຍເປັນທາດຖືກບັງຄັບໃຫ້ອອກແຮງງານ ຍ້ອນວ່າ ສະຖານະພາບຂອງຕົນທີ່ຜິດກົດໝາຍໃນປະເທດທີ່ເປັນຈຸດໝາຍປາຍທາງ. ສະນັ້ນ, ຜູ້ຖືກລັກລອບສາມາດກາຍເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກໍໄດ້.[8]

6 ເຖິງແມ່ນວ່າບັນດາຊ່ຽວຊານ ແລະ ຜູ້ປະຕິບັດງານຕົວຈິງ ເບິ່ງວ່າ "ການເຫັນດີ" ແມ່ນແຕກຕ່າງກັນລະຫວ່າງການຄ້າມະນຸດ ແລະ ການລັກລອບກໍຕາມ, ສິ່ງທີ່ສຳຄັນແມ່ນການກຳນົດຄວາມໝາຍຂອງການລັກລອບທີ່ບໍ່ເວົ້າເຖິງການເຫັນດີແຕ່ເວົ້າເຖິງການຊ່ວຍເຫຼືອໃຫ້ຂ້າມຊາຍແດນໄປປະເທດໃດໜຶ່ງຢ່າງຜິດກົດໝາຍ ຫຼື ການຈັດຫາໃຫ້ມີການຢູ່ອາໄສຢ່າງຜິດກົດໝາຍ ຢູ່ປະເທດອື່ນ ຊຶ່ງການລັກລອບແນໃສ່ຜົນປະໂຫຍດທາງການເງິນ ຫຼື ຜົນປະໂຫຍດຮູບການອື່ນ.

7 ກົດໝາຍຕົວແບບ ຂອງອົງການ UNODC ວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ປີ 2010, ຂໍໃຫ້ເບິ່ງ http://www.unodc.org/documents/human-trafficking/Model_Law_Smuggling_of_Migrants_10-52715_Ebook.pdf.

8 ປຶ້ມຄູ່ມືຂອງ ASEAN ກ່ຽວກັບການຮ່ວມມືສາກົນທາງດ້ານກົດໝາຍ ໃນຄະດີຄ້າມະນຸດ 2010, ຂໍໃຫ້ເບິ່ງ http://www.unodc.org/documents/human-trafficking/ASEAN_Handbook_on_International_Legal_Cooperation_in_TIP_Cases.pdf.

## **ຂໍ້ຄິດເຫັນ:** ການແຍກການກະທຳຜິດລະຫວ່າງການຄ້າມະນຸດ ແລະ ການລັກລອບເອົາຄົນເຂົ້າ-ອອກປະເທດ

ມັນມີຄວາມຈຳເປັນສຳລັບປະເທດຕ່າງໆ ທີ່ຈະມີການແຍກການກະທຳຜິດລະຫວ່າງການຄ້າມະນຸດ ແລະ ການລັກລອບເອົາຄົນເຂົ້າ-ອອກປະເທດ. ນີ້ເປັນເລື່ອງທີ່ສຳຄັນຍ້ອນວ່າ ສອງການກະທຳຜິດນີ້ມີອົງປະກອບທີ່ແຕກຕ່າງກັນ ຊຶ່ງຈຳເປັນຕ້ອງໄດ້ນຳມາພິຈາລະນາເມື່ອມີການສືບສວນ-ສອບສວນອາຊະຍາກຳ, ການລະບຸຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼື ຈາກການລະເມີດສິດທິມະນຸດຮູບການອື່ນ, ແລະ ເມື່ອເວລາທີ່ຮ້ອງຟ້ອງຄະດີອາຍາຜູ້ກະທຳຜິດ. ການແຍກການກະທຳຜິດມີຄວາມສຳຄັນສະເພາະ ເມື່ອເວລາທີ່ພົວພັນເຖິງການຮ່ວມມືສາກົນ (ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແລະການສົ່ງຜູ້ຮ້າຍຂ້າມແດນ) ເພື່ອເຮັດໃຫ້ບັນດາປະເທດຕ່າງໆ ໄດ້ຊອກຫາຫຼັກຖານ ຫຼື ຜູ້ຖືກສົງໄສ/ຜູ້ກະທຳຜິດ ທີ່ພົວພັນ ເຖິງການກະທຳຜິດສະເພາະດັ່ງກ່າວ ຊຶ່ງເຂົາເຈົ້າອາດຢູ່ປະເທດອື່ນ (ເບິ່ງ ພາກ 2).

## 1.6. ສິດອຳນາດສານ-ລວມທັງສິດອຳນາດນອກຂອບເຂດດິນແດນ

ມາດຕາ 15 ຂອງສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງກຳນົດຂອບເຂດສິດອຳນາດ (ຫຼື ສິດອຳນາດທາງກົດໝາຍ) ທີ່ລັດສາມາດກຳນົດ

ຂຶ້ນຕໍ່ກັບອາຊະຍາກຳ ທີ່ກຳນົດໄວ້ໃນສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ ແລະ ອະນຸສັນຍາການລັກລອບເອົາຄົນເຂົ້າ-ອອກປະເທດ. ພາຍໃຕ້ສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ, ມັນເປັນການບັງຄັບໃຫ້ທຸກລັດພາຄີນຳໃຊ້ສິດອຳນາດຂອງຕົນຕໍ່ການກະທຳຜິດທີ່ສອດຄ່ອງກັບອະນຸສັນຍາການລັກລອບເອົາຄົນເຂົ້າ-ອອກປະເທດ. ຫຼັກການສິດອຳນາດກຳນົດວ່າ ລັດພາຄີສາມາດສ້າງ ແລະ ປະຕິບັດກົດໝາຍຕໍ່ການກະທຳທີ່ເປັນຄວາມຜິດທາງອາຍາ ທີເກີດຂຶ້ນຢູ່ໃນດິນແດນຂອງຕົນ. ສິດອຳນາດຍັງກວມໄປເຖິງເຮືອກຳປັ່ນທີ່ຕິດທຸງຊາດຂອງລັດໜຶ່ງ ຫຼື ຍົນທີ່ຈົດທະບຽນພາຍໃຕ້ກົດໝາຍຂອງລັດໃດໜຶ່ງ.

ເຖິງຢ່າງໃດກໍຕາມ, ສິດອຳນາດພາຍໃນດິນແດນຂອງຕົນຍັງບໍ່ພຽງພໍ. ເພື່ອເຮັດໃຫ້ລັດພາຄີໄດ້ຕໍ່ຕ້ານອາຊະຍາກຳຂ້າມຊາດໄດ້ຢ່າງມີປະສິດທິຜົນ

ເຊັ່ນ ການລັກລອບເອົາຄົນເຂົ້າ-ອອກປະເທດ, ລັດພາຄີ ຄວນພິຈາລະນາຮັບປະກັນວ່າເຂົາເຈົ້າມີສິດອຳນາດນອກຂອບເຂດດິນແດນຂອງຕົນ ຕໍ່ກັບການກະທຳຜິດໃນສະຖານການລັກລອບດັ່ງກ່າວ. ນີ້ແມ່ນການນຳໃຊ້ສິດອຳນາດຂອງຕົນນອກດິນແດນຂອງລັດ. ຖ້າບໍ່ດັ່ງນັ້ນ, ບັນດາກຸ່ມອາຊະຍາກຳຂ້າມຊາດ ສາມາດລົບຫຼີກຊ່ອງຫວ່າງກົດໝາຍຂອງລັດຕ່າງໆ ທີ່ແຕກຕ່າງກັນໄດ້ ແລະ ສາມາດຫຼົບໜີຈາກການຖືກຮ້ອງຟ້ອງດຳເນີນຄະດີໄດ້.

ເພື່ອຮັບປະກັນຄວາມມີປະສິດທິຜົນສູງສຸດຂອງກົດໝາຍ ທີ່ຕ້ານອາຊະຍາກຳຂ້າມຊາດ, ບັນດາລັດອາດກຳນົດສິດອຳນາດນອກດິນແດນຂຶ້ນເມື່ອມີການກະທຳຜິດໜຶ່ງ:

- ທີ່ແຕະຕ້ອງພົນລະເມືອງຂອງລັດນັ້ນ-ມາດຕາ 15(2)(ກ);
- ໂດຍພົນລະເມືອງຂອງລັດນັ້ນ ຫຼື ໂດຍບຸກຄົນອື່ນ ທີ່ເປັນຄົນບໍ່ມີສັນຊາດ ອາໄສຢູ່ໃນລັດນັ້ນ- ມາດຕາ 15(2)(ຂ); ຫຼື
- ນອກດິນແດນຂອງລັດໜຶ່ງ ທີ່ເປັນອາຊະຍາກຳຮ້າຍແຮງ ພາຍໃນດິນແດນຂອງລັດນັ້ນ- ມາດຕາ 15(2)(ຄ).

ພາຍໃຕ້ສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ (ມາດຕາ 15), ລັດປະຕິເສດການສົ່ງຜູ້ຮ້າຍຂ້າມແດນ (ການມອບຕົວບຸກຄົນນັ້ນໃຫ້) ໃຫ້ປະເທດອື່ນ ເພື່ອໄປດຳເນີນຄະດີ ຍ້ອນວ່າຜູ້ກະທຳຜິດນັ້ນເປັນພົນລະເມືອງຂອງຕົນເອງ ແຕ່ລັດຕ້ອງໄດ້ກຳນົດສິດອຳນາດ ຖ້າວ່າຜູ້ກະທຳຜິດເປັນພົນລະເມືອງຂອງຕົນ ແລະ ມີໜ້າຢູ່ໃນດິນແດນຂອງຕົນ ລັດນັ້ນຈະດຳເນີນຄະດີຕໍ່ຜູ້ກ່ຽວ. ນີ້ແມ່ນພັນທະຂອງລັດ ໃນການກຳນົດສິດອຳນາດໃນການດຳເນີນຄະດີຕໍ່ຜູ້ກະທຳຜິດ ໂດຍບໍ່ຂຶ້ນກັບວ່າ ການກະທຳຜິດນັ້ນໄດ້ເກີດຂຶ້ນຢູ່ບ່ອນໃດ.

ສົນທິສັນຍາ ຍັງກຳນົດວ່າ ລັດພາຄີອາດກຳນົດສິດອຳນາດຕໍ່ກັບການກະທຳຜິດທີ່ ເກີດຂຶ້ນໃນດິນແດນຂອງຕົນ ແລະ ລັດສາມາດປະຕິເສດການສົ່ງຜູ້ກະທຳຜິດ ດ້ວຍເຫດຜົນອື່ນກໍໄດ້ (ທີ່ບໍ່ແມ່ນເຫດຜົນຍ້ອນວ່າຜູ້ກະທຳຜິດເປັນພົນລະເມືອງຂອງຕົນ).

ບົດບັນຍັດກ່ຽວກັບສິດອຳນາດນອກຂອບເຂດດິນແດນ ຊຸກຍູ້ (ແຕ່ບໍ່ແມ່ນບັງຄັບ) ໃຫ້ລັດໄດ້ນຳໃຊ້ມາດຕະການໃດໜຶ່ງ ຕໍ່ກັນກັບພົນລະເມືອງຂອງຕົນທີ່ໄດ້ກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ ຢູ່ປະເທດອື່ນ. ບົດບັນຍັດເຫຼົ່ານີ້ຍັງອະນຸຍາດໃຫ້ລັດໃດໜຶ່ງໄດ້ນຳໃຊ້ສິດອຳນາດຂອງຕົນ ຕໍ່ກັບບຸກຄົນທີ່ດຳເນີນການ-ກະທຳຜິດຢູ່ນອກດິນແດ່ຂອງຕົນນຳອີກ ເຊັ່ນຜູ້ທີ່ລັກລອບນຳຄົນເຂົ້າດິນແດນຂອງຕົນ.





## **ຂໍ້ຄິດເຫັນ:** ສິດອຳນາດນອກຂອບເຂດດິນແດນ ໃນກົດໝາຍກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ

ຕໍ່ອາຊະຍາກຳຂ້າມຊາດທັງໝົດ, ມັນມີຄວາມສຳຄັນທີ່ຕ້ອງຮັບປະກັນວ່າການລັກລອບເອົາຄົນເຂົ້າ-ອອກປະເທດກຳນົດສິດອຳນາດນອກຂອບເຂດດິນແດນ. ນີ້ແມ່ນໝາກຫົວໃຈສຳຄັນຍ້ອນວ່າ ຜູ້ຈັດຕັ້ງດຳເນີນການລັກລອບເອົາຄົນເຂົ້າ-ອອກປະເທດ ແມ່ນຢູ່ໃນຫຼາຍປະເທດ-ຊຶ່ງແມ່ນປະເທດຕົ້ນທາງ, ປະເທດທາງຜ່ານ, ປະເທດປາຍທາງ ຫຼືປະເທດອື່ນ. ຄວາມຈຳເປັນສຳລັບການກຳນົດສິດອຳນາດນອກຂອບເຂດດິນແດນອະທິບາຍໃນແຜນວາດ

**ແຜນວາດ 3: ຄວາມຈຳເປັນສຳລັບສິດອຳນາດນອກຂອບເຂດດິນແດນ**




ຖ້າຫາກ ກົດໝາຍຕ້ານການລັກລອບຂອງ**ປະເທດ ກ** ສາມາດນຳໃຊ້ນອກດິນແດນໄດ້, **ປະເທດ ກ** ຈະສາມາດນຳໃຊ້ກົດໝາຍ ຕໍ່ກັບຜູ້ກະທຳຜິດທີ່ຢູ່ **ປະເທດ ຄ** ໄດ້.

## **ຂໍ້ຄິດເຫັນ:** ມາດຕະຖານຕ່ຳສຸດ ຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດສາມາດສ້າງຄວາມເຂັ້ມແຂງໄດ້

ອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດກຳນົດມາດຕະຖານຕ່ຳສຸດ ຊຶ່ງບັນດາລັດພາຄີຕ້ອງໄດ້ຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍຕາມ, ບັນດາປະເທດສາມາດສ້າງຄວາມເຂັ້ມແຂງໃຫ້ບັນດາມາດຕະຖານຕ່ຳສຸດ ເຫຼົ່ານີ້ໃຫ້ສາມາດຍົກສູງຄວາມສາມາດເພື່ອສະກັດກັ້ນ ແລະ ຕໍ່ສູ້ກັບການລັກລອບເອົາຄົນເຂົ້າ-ອອກປະເທດ.

# ພາກ 2

## ພັນທະເພີ່ມເຕີ່ມທີ່ສຳຄັນທີ່ກຳນົດໄວ້ໃນສົນທິສັນຍາວ່າດ້ວຍອາຊະຍາກຳທີ່ມີການຈັດຕັ້ງ



### 2.1. ວິທີການທີ່ປະສົມປະສານທີ່ເກີດຜົນໃນການເຮັດໃຫ້ການລັກລອບເອົາຄົນ ເຂົ້າ-ອອກປະເທດເປັນການກະທຳຜິດທາງອາຍາ

ຫຼາຍລັດພາຄີເຫັນວ່າ ເຂົາເຈົ້າຈຳເປັນຕ້ອງນຳໃຊ້ວິທີການທີ່ປະສົມປະສານທີ່ເກີດຜົນໃນການເຮັດໃຫ້ການລັກລອບເອົາຄົນເຂົ້າ-ອອກປະເທດ ເປັນການກະທຳຜິດທາງອາຍາ ແລະ ສະນັ້ນເພື່ອຮັບປະກັນວ່າມັນຈະສາມາດທັບມ້າງ, ຮ້ອງຟ້ອງດຳເນີນຄະດີ, ລົງໂທດ ແລະ ສະກັດກັ້ນກຸ່ມອາຊະຍາກຳທີ່ມີການຈັດຕັ້ງ ທີ່ດຳເນີນການລັກລອບໄດ້. ວິທີການທີ່ປະສົມປະສານເພື່ອພັດທະນາກົດໝາຍທີ່ມີປະສິດທິພາບ ເພື່ອກຳນົດ ການລັກລອບເອົາຄົນເຂົ້າ-ອອກປະເທດ ມີປະສິດທິຜົນ ລວມມີ ບັນດາອົງປະກອບດັ່ງລຸ່ມນີ້:

- ລັດຈຳເປັນຕ້ອງກຳນົດຢ່າງມີປະສິດທິຜົນການເຄື່ອນໄຫວຕ່າງໆ ທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດ ເປັນການກະທຳຜິດທາງອາຍາ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ;

- ລັດຈຳເປັນຕ້ອງກຳນົດອົງການດຳເນີນຄະດີອາຍາກ່ຽວກັບບັນດາຄະດີເຫຼົ່ານີ້ສະເພາະ ໂດຍຖືເອົາກົດໝາຍວ່າດ້ວຍການຕ້ານການຟອກເງິນທີ່ເຂັ້ມແຂງ ແລະ ກົດໝາຍຮິບຊັບສິນທີ່ໄດ້ມາຈາກການກໍ່ອາຊະຍາກຳ-ລວມທັງການລັກລອບເອົາຄົນເຂົ້າ-ອອກປະເທດ-ທີ່ໄດ້ຜົນປະໂຫຍດມາຈາກການກະທຳຜິດເຫຼົ່ານີ້;

- ລັດພາຄີ ຈຳເປັນຕ້ອງມີກົນໄກການຮ່ວມມືສາກົນທີ່ເຂັ້ມແຂງ- ລວມທັງກົດໝາຍ ແລະ ສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ

- ແລະ ກົດໝາຍວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະກັນທາງກົດໝາຍ ລະຫວ່າງລັດຖະບານ -ນອກຈາກການຊ່ວຍເຫຼືອອື່ນໆ ເພື່ອຮັບປະກັນການເກັບກຳຫຼັກຖານທີ່ພຽງພໍສຳເລັບການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ; ແລະ

- ອົງການຈັດຕັ້ງຕ່າງໆ (ລວມທັງອົງການຈັດຕັ້ງຂອງລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ແລະ ອຸດສາຫະກຳ) ຈຳເປັນຕ້ອງຮ່ວມມືກັນໃນລະດັບພາຍໃນປະເທດ ແລະ ສາກົນເພື່ອຈັດຕັ້ງປະຕິບັດກົດໝາຍໃຫ້ມີປະສິດທິພາບ.

ມັນມີຄວາມສຳຄັນທີ່ຕ້ອງພິຈາລະນາ ພັນທະເພີ່ມເຕີມພາຍໃຕ້ສົນທິສັນຍາອາຊະຍາກຳທີ່ມີການຈັດຕັ້ງ ຍ້ອນວ່າເພື່ອກາຍເປັນພາຄີຂອງອະນຸສັນຍາວ່າດ້ວຍການລັກລອບເອົາຄົນເຂົ້າ-ອອກປະເທດ, ລັດຕ້ອງໄດ້ກາຍເປັນພາຄີຂອງສົນທິສັນຍາອາຊະຍາ ກຳທີ່ມີການຈັດຕັ້ງ ແລະ ຕ້ອງມີກອບກົດໝາຍທີ່ຈັດຕັ້ງປະຕິບັດທັງສົນທິສັນຍາ

### 2.2. "ຕິດຕາມເງິນ"- ແມ່ນຍຸດທະສາດສຳຄັນໃນການຕ້ານການລັກລອບເອົາຄົນ ເຂົ້າ-ອອກປະເທດ

ຕາມທີ່ເນັ້ນໜັກໃນສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ, ຄວາມຕ້ອງການຕົ້ນຕໍຂອງກຸ່ມອາຊະຍາກຳທີ່ມີການຈັດຕັ້ງແມ່ນການໄດ້ຜົນປະໂຫຍດທາງການເງິນ ຫຼື ຮູບການອື່ນໆ ໃນທາງກົງຫຼືທາງອ້ອມ. ສະນັ້ນ, ມັນຈຶ່ງສຳຄັນຫຼາຍທີ່ອົງການປົກປ້ອງກົດໝາຍທີ່ມີສິດອຳນາດ ມີຄວາມສາມາດໃນການທັບມ້າງຜົນປະໂຫຍດ ຫຼືລາຍໄດ້ຂອງກຸ່ມອາຊະຍາກອນທີ່ມີການຈັດຕັ້ງດັ່ງກ່າວ. ສະນັ້ນ ຈຶ່ງມີຄວາມສຳຄັນທີ່ອົງການປົກປ້ອງກົດໝາຍວາງເປົ້າໝາຍໃສ່ຜົນປະໂຫຍດ ຫຼື ແຫຼ່ງທຶນຂອງກຸ່ມອາຊະຍາກອນທີ່ມີການຈັດຕັ້ງ, ເພື່ອຫຼຸດຜ່ອນສິ່ງຈູງໃຈໃນການດຳເນີນການລັກລອບເອົາຄົນເຂົ້າ-ອອກປະເທດ. ໝາຍຄວາມວ່າ, ອົງການປົກປ້ອງກົດໝາຍຕ້ອງສາມາດ "ຕິດຕາມເງິນ" ຂອງຜູ້ດຳເນີນ ການລັກລອບໄດ້. ນີ້ຊ່ວຍໃຫ້ສາມາດຮ້ອງຟ້ອງດຳເນີນຄະດີຕໍ່ "ໂຕການໃຫຍ່" ຂອງຂະບວນການອາຊະຍາກຳ ທີ່ເປັນຜູ້ຄວບຄຸມບັນດາຜົນປະໂຫຍດ ຫຼື ເງິນທີ່ໄດ້ມາຈາກການລັກລອບເອົາຄົນເຂົ້າ-ອອກປະເທດ ຫຼາຍກວ່າຈະເປັນຜູ້ປະຕິບັດຕົວຈິງ.

#### 2.2.1. ການກະທຳຜິດໃນສະຖານການຟອກເງິນ ແລະ ມາດຕະການອື່ນໆ

ການຟອກເງິນກ່ຽວຂ້ອງກັບການເຊື່ອງອຳ, ຕົ້ນກຳເນີດ, ຫຼື ຈຸດໝາຍປາຍທາງ, ຫຼື ການຄອບຄອງ ຫຼື ການນຳໃຊ້ ເງິນທີ່ໄດ້ມາຈາກການເຄື່ອນໄຫວຜິດກົດໝາຍ. ເວົ້າອີກຄວາມໜຶ່ງວ່າ, ການຟອກເງິນແມ່ນການຈັດການກັບເງິນທີ່ໄດ້ມາຈາກການກະທຳຜິດກົດໝາຍ. ສົນທິສັນຍາຕ້ານອາຊະຍາ ກຳທີ່ມີການຈັດຕັ້ງ ຮຽກຮ້ອງໃຫ້ລັດພາຄີ ກຳນົດຂະບວນການຈັດການກັບເງິນທີ່ໄດ້ມາຈາກການກະທຳຜິດກົດໝາຍເປັນການກະທຳຜິດທາງອາຍາ ຕາມທີ່ກຳນົດໄວ້ໃນມາດຕາ 6(1)(ກ) ແລະ (ຂ). ເງື່ອນໄຂຕົ້ນຕໍແມ່ນການ



ກຳນົດໂທດອາຍາ ຕໍ່ການປ່ຽນເງິນທີ່ໄດ້ມາຈາກການກະທຳຜິດ ຫຼື ການໂອນ, ການເຊື່ອງອຳ ຫຼື ປິດບັງທີ່ມາທີ່ແທ້ຈິງ ແລະ ການໄດ້ມາ, ການຄອບຄອງ, ຫຼື ການນຳໃຊ້ຊັບສິນດັ່ງກ່າວ ໂດຍເປັນການກະທຳຜິດທາງອາຍາ ຊຶ່ງຮູ້ດີວ່າຊັບສິນນັ້ນໄດ້ມາຈາກການກະທຳຜິດທາງອາຍາ. ເພື່ອເປັນການເພີ່ມເຕີມໃສ່ ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ, ຍັງມີນິຕິກຳສາກົນຢູ່ຫຼາຍ ຢ່າງ ທີ່ຮຽກຮ້ອງໃຫ້ບັນດາລັດພາຄີ ກຳນົດການຟອກເງິນເປັນການກະທຳຜິດທາງອາຍາ ແລະ ມາດຕະການໃນການສະກັດກັ້ນການຟອກເງິນ.[9]

ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ຍັງກຳນົດພັນທະຕື່ມອີກໃຫ້ລັດພາຄີໄດ້ກຳນົດການມີສ່ວນຮ່ວມ ຫຼື ການສົມຮູ້ຮ່ວມຄິດ ຫຼື ເຂົ້າຮ່ວມການກະທຳຜິດ, ຄວາມພະຍາຍາມກະທຳຜິດ ແລະ ການຊ່ວຍເຫຼືອ, ການຍຸແຍ່, ການຊຸກຍູ້ ແລະ ການໃຫ້ການປຶກສາ ໃນກະທຳຜິດທີ່ກ່ຽວຂ້ອງກັບການຟອກເງິນ ລ້ວນແຕ່ໄດ້ຮັບໂທດອາຍາ.

ການກະທຳຜິດ ທີ່ກ່າວມານີ້ນຳໃຊ້ກັບທຸກການກະທຳຜິດທາງອາຍາທີ່ຮ້າຍແຮງ ແລະ ກ່ຽວຂ້ອງກັບການຟອກເງິນ – ຊຶ່ງເອີ້ນວ່າ "ການກະທຳຜິດຕົ້ນຕໍ".[10] ດ້ວຍເຫດນີ້, ການລັກລອບເອົາຄົນເຂົ້າ-ອອກປະເທດ ຄວນນອນໃນການກະທຳຜິດຕົ້ນຕໍນີ້ ໃນກົດໝາຍວ່າດ້ວຍການຕ້ານການຟອກເງິນຂອງລັດພາຄີ. ການກະທຳຜິດຕົ້ນຕໍ (ຕົວຢ່າງການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ) ບໍ່ຈຳເປັນຕ້ອງເກີດຂຶ້ນພາຍໃນດິນແດນຂອງລັດໜຶ່ງ ເພື່ອວ່າລັດນັ້ນສາມາດຮ້ອງຟ້ອງດຳເນີນຄະດີອາຍາໃນສະຖານຟອກເງິນໄດ້.

## **ຂໍ້ຄິດເຫັນ:** ຮັບປະກັນວ່າການຟອກເງິນແລະ ການກະທຳຜິດຕົ້ນຕໍ ສາມາດຖືກຮ້ອງຟ້ອງດຳເນີນຄະດີແຍກຈາກກັນຕ່າງຫາກ

ການກຳນົດເງື່ອນໄຂວ່າຕ້ອງຕັດສິນລົງໂທດການກະທຳຜິດຕົ້ນຕໍກ່ອນ (ຕົວຢ່າງ ການລັກລອບເອົາຄົນເຂົ້າ-ອອກປະເທດ) ອາດສະກັ້ນກັດການຕັດສິນການຟອກເງິນໃນກໍລະນີທີ່ບໍ່ສາມາດຕັດສິນການກະທຳຜິດຕົ້ນຕໍໄດ້ (ຕົວຢ່າງ ຜູ້ຖືກສົງໄສໄດ້ໜີອອກຈາກສິດອຳນາດສານຂອງລັດໜຶ່ງ ຫຼື ການກະທຳຜິດເດັດຖານໄດ້ເກີດຂຶ້ນຢູ່ໃນສິດອຳນາດສານຂອງລັດອື່ນ) ແຕ່ວ່າມີຫຼັກຖານທີ່ຈະແຈ້ງສຳລັບການຕັດສິນຄະດີໃນສະຖານການຟອກເງິນ. ສະນັ້ນ, ຈຶ່ງມີຄວາມສຳຄັນວ່າ ເຈົ້າໜ້າ ທີ່ປົກປ້ອງກົດໝາຍ ມີສິດອຳນາດໃນການຕິດຕາມເປົ້າໝາຍການຟອກເງິນແຍກຕ່າງຫາກຈາກການກະທຳຜິດຕົ້ນຕໍ (ເຊັ່ນການລັກລອບເອົາຄົນເຂົ້າ-ອອກປະເທດຢ່າງຜິດກົດໝາຍ)

ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ຍັງກຳນົດມາດຕະການເພີ່ມເຕີມໃຫ້ລັດພາຄີ (ທັງເປັນການບັງຄັບ ແລະ ບໍ່ເປັນການບັງຄັບ) ໄດ້ນຳໃຊ້ແນໃສ່ສະກັດກັ້ນການຟອກເງິນ, ລວມທັງການໃຫ້ການຊ່ວຍເຫຼືອແກ່ສະຖາບັນການເງິນເພື່ອສະກັດກັ້ນແຫຼ່ງທຶນຈາກອາຊະຍາກຳ ໄຫຼ ເຂົ້າສູ່ລະດັບການເງິນ ແລະ ກວດສອບ ແລະ ຕິດຕາມ ຊັບສິນທີ່ຜິດກົດໝາຍ.

ມາດຕາ 7 ຂອງສົນທິສັນຍາກຳນົດ

- ສ້າງລະບອບລະບຽບ ແລະ ການຕິດຕາມກວດກາທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;
- ສ້າງຄວາມສາມາດໃນການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານລະຫວ່າງອົງການປົກປ້ອງກົດໝາຍ ແລະ ຜູ້ທີ່ກ່ຽວຂ້ອງ;
- ພິຈາລະນາສ້າງຄວາມສາມາດໃນການກວດສອບ ແລະ ຕິດຕາມການເໜັງຕີງຂອງເງິນສົດທີ່ໄຫຼວຽນຕາມຊາຍແດນ ຕາມເງື່ອນໄຂທີ່ເຮັດໄດ້, ນຳໃຊ້ອົງການຈັດຕັ້ງທີ່ກ່ຽວຂ້ອງໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງກັບການຟອກເງິນ; ແລະ
- ສົ່ງເສີມການຮ່ວມມືສາກົນ ລະຫວ່າງອົງການປົກປ້ອງກົດໝຍ ແລະ ອົງການຈັດຕັ້ງທີ່ຄຸ້ມຄອງວຽກງານການເງິນ.

---

[9] ສົນທິສັນຍາຈຳນວນໜຶ່ງ, ສົນທິສັນຍາ ຂອງອົງການສປຊວ່າດ້ວຍການຕ້ານການຄ້າຢາເສບຕິດ ແລະ ສານອອກລິດຕໍ່ຈິດປະສາດ (the United Nations Convention against Illicit Traffic of Narcotic Drugs and Psychotropic Substances), ສົນທິສັນຍາຂອງອົງການສປຊວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (United Nations Convention against Corruption), ແລະ ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ທີ່ເວົ້າຂ້າງເທິງນີ້ ໄດ້ກຳນົດພັນທະໃຫ້ລັດພາຄີໄດ້ກຳນົດການຟອກເງິນເປັນການກະທຳຜິດທາງອາຍາ ແລະ ສະກັດກັ້ນການຟອກເງິນ. ນອກຈາກນີ້ຄຳແນະນຳ 40 ຂໍ້ຂອງ FATF ຍັງໄດ້ກຳນົດມາດຕະຖານຮອບດ້ານ ສຳລັບລັດພາຄີ ເພື່ອນຳໃຊ້ ໃນການເຮັດໃຫ້ລະບອບການຕ້ານການຟອກເງິນເຂັ້ມແຂງ. ບັນດາສົນທິສັນຍາເຫຼົ່ານີ້ສາມາດດາວໂລດໄດ້ຈາກ https://treaties.un.org/.

[10] ອາຊະຍາກອນສ້າງຜົນກຳໄລມະຫາສານຈາກອາຊະຍາກຳທີ່ຮ້າຍແຮງ ແລະ ມີການຈັດຕັ້ງ, ເຊັ່ນການຄ້າມະນຸດ, ການລັກລອບເອົາຄົນເຂົ້າ-ອອກປະເທດ, ການສໍ້ລາດບັງຫຼວງ, ການຄ້າຢາເສບຕິດ, ການຄ້າອາວຸດເສິກ, ການກໍ່ການຮ້າຍ, ການຫຼົບຫຼີກການເສຍພາສີ. ບັນດາການກະທຳຜິດເຫຼົ່ານີ້ເອີ້ນວ່າການກະທຳຜິດຕົ້ນຕໍ (predicate offences) ໃນກົດໝາຍວ່າດ້ວຍການຕ້ານການຟອກເງິນ.

### 2.2.2. ການຣິບຊັບຈາກການກະທຳຜິດທາງອາຍາ

ການຣິບຊັບຈາກການກະທຳຜິດທາງອາຍາ ຍັງເອີ້ນອີກວ່າການຣິບຊັບ, ການກອບກູ້ຊັບສິນ ຫຼື ການຣິບໝາກຜົນຂອງການກະທຳຜິດ. ນອກຈາກການສ້າງລະບອບຕ້ານການຟອກເງິນທີ່ເຂັ້ມແຂງແລ້ວ, ບັນດາລັດຄວນມີອົງການຈັດຕັ້ງທີ່ລະບຸ, ກວດກາ, ຕິດຕາ ແລະ ຣິບຊັບ ພາຍໃຕ້ສິດອຳນາດຂອງຕົນ **ເພື່ອຣິບຊັບສຸດທ້າຍທີ່ຍັງມີຢູ່.**[11] ນີ້ສາມາດປະສົບຜົນສຳເລັດໄດ້ໂດຍຜ່ານບົດບັນຍັດທີ່ກ່ຽວຂ້ອງທີ່ກຳນົດໄວ້ໃນກົດໝາຍອາຍາຂອງລັດ ກົດໝາຍຕ້ານການຟອກເງິນຂອງລັດນັ້ນ ຫຼື ກົດໝາຍວ່າດ້ວຍການດຳເນີນການຣິບຊັບສະເພາະຕ່າງຫາກ.

ໂດຍທົ່ວໄປແລ້ວ, ລັດພາຄີສາມາດຣິບຊັບທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດດ້ວຍສອງວິທີ:

- ເມື່ອໄດ້ມີການຕັດສິນຄະດີແລ້ວ (ການຕັດສິນຄະດີຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ); ຫຼື
- ໃນກໍລະນີທີ່ບໍ່ມີຄຳຕັດສິນຄະດີເທື່ອ ແລະ ທີ່ສາມາດພິສູດໄດ້ວ່າ ຊັບສິນໃດໜຶ່ງສະເພາະ ແມ່ນໄດ້ມາຈາກການກະທຳຜິດຈາກການລັກລອບເອົາຄົນເຂົ້າ-ອອກປະເທດ (ການດຳເນີນຄະດີອາຍາ ບົນພື້ນຖານທີ່ຍັງບໍ່ທັນມີຄຳຕັດສິນເທື່ອ-ເອີ້ນວ່າການຣິບ ຫຼືອາຍັດຊັບທາງແພ່ງ).

ວິທີທີ່ສອງເປັນທາງເລືອກທີ່ເປັນປະໂຫຍດສໍາລັບລັດພາຄີ ທີ່ມີເປົ້າໝາຍຜູ້ກະທໍາຜິດແລ້ວ ແຕ່ບໍ່ສາມາດຮັບປະກັນໄດ້ວ່າຜູ້ກ່ຽວຈະຖືກຕັດສິນໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ.

ພັນທະຕົ້ນຕໍຂອງລັດໃນການກຳນົດກົດໝາຍ ແມ່ນການກຳນົດສິດອຳນາດທີ່ສາມາດຣິບ ຫຼື ອາຍັດຊັບທີ່ໄດ້ມາຈາກການກະທຳຜິດທາງອາຍາ, ລວມທັງການນຳໃຊ້ມາດຕະການຕໍ່ການລັກລອບເອົາຄົນເຂົ້າ-ອອກປະເທດ. ກົດໝາຍດຳເນີນຄະດີອາຍາ ອະນຸຍາດໃຫ້ອົງການ ຫຼື ເຈົ້າໜ້າທີ່ປົກປ້ອງກົດໝາຍ ໄດ້ນຳໃຊ້ມາດຕະການທາງກົດໝາຍຕໍ່ທຸກການເຄື່ອນໄຫວກໍ່ການກະທຳຜິດທີ່ເປັນເປົ້າໝາຍ, ບໍ່ພຽງແຕ່ການກະທຳຜິດທີ່ກ່ຽວຂ້ອງກັບການຟອກເງິນເທົ່ານັ້ນ. ສະຫຼຸບແລ້ວ, ມີຄວາມຈຳເປັນທີ່ອົງການປົກປ້ອງກົດໝາຍຕ້ອງສືບສວນການກະທຳຜິດຢ່າງຮອບດ້ານ ຊຶ່ງເປັນການກະທຳຜິດທີ່ສ້າງຜົນປະໂຫຍດ ຫຼືເງິນຢ່າງມະຫາສານ ຕາມທີ່ອະທິບາຍໃນແຜນວາດ 4 ລຸ່ມນີ້.

**ແຜນວາດ 4: ມາດຕະການຕ່າງໆ ໃນການຕ້ານອາຊະຍາກຳ ທີ່ສ້າງຜົນກຳໄລມະຫາສານທາງການເງິນ**




[11] 'ລາຍໄດ້ຈາກອາຊະຍາກຳ' ໝາຍເຖິງຊັບສິນໃດໜຶ່ງທີ່ໄດ້ມາຈາກການກະທຳຜິດອາຍາ ທາງກົງ ຫຼື ທາງອ້ອມ (ມາດຕາ 2(ຈ), ສົນທິສັນຍາຕ້ານອາຊະຍາກຳ ທີ່ມີການຈັດຕັ້ງ).
'ຊັບສິນ' ໝາຍເຖິງຊັບສິນທຸກປະເພດ, ບໍ່ວ່າຈະມີຕົວຕົນ ຫຼື ບໍ່ມີຕົວຕົນ, ເຄື່ອນທີ່ ຫຼື ຄົງທີ່, ຈັບບາຍໄດ້ ຫຼື ຈັບບາຍບໍ່ໄດ້ ແລະ ມີເອກະສານຢັ້ງຢືນຖືກຕ້ອງ ຕາມກົດໝາຍ ຫຼື ມີເອກະສານທີ່ເປັນຫຼັກຖານຢັ້ງຢືນ, ຫຼື ຜົນປະໂຫຍດ ຫຼື ດອກເບັ້ຽ ໃນຊັບສິນດັ່ງກ່າວ (ມາດຕາ 2(ງ), ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ).
'ການອາຍັດ' ຫຼື 'ການຍຶດ' ໝາຍເຖິງການຫ້າມໂອນ, ປ່ຽນແປງ, ຂາຍ ຫຼື ເຄື່ອນຍ້າຍຊັບສິນເປັນການຊົ່ວຄາວ ຫຼື ຄຸ້ມຄອງ ຫຼື ຄວບຄຸມຊັບສິນເປັນການຊົ່ວຄາວ ບົນພື້ນ ຖານຄຳສັ່ງທີ່ອອກໂດຍສານ ຫຼື ອົງການຈັດຕັ້ງອື່ນທີ່ມີສິດອຳນາດ. (ມາດຕາ 2(ສ), ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ).
'ການຣິບ', ຊຶ່ງລວມທັງການຍຶດທີ່ສາມາດເຮັດໄດ້, ໝາຍເຖິງການຣິບຊັບສິນເປັນການຖາວອນໂດຍຄຳສັ່ງສານ ຫຼື ອົງການຈັດຕັ້ງທີ່ມີສິດອຳນາດ (ມາດຕາ 2(ຊ), ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ).

ພາກ 2

## 2.3.ການຮ່ວມມືສາກົນ ແລະ ເງື່ອນໄຂພາຍໃຕ້ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ

ລັດຕ່າງໆຈຳເປັນຕ້ອງມີນິຕິກຳຮ່ວມມືສາກົນທີ່ມີປະສິດທິພາບ ໃນເລື່ອງອາຍາ ເພື່ອຕ້ານກັບການລັກລອບເອົາຄົນເຂົ້າ-ອອກປະເທດ. ກົດໝາຍວ່າດ້ວຍການຊ່ວຍເຫຼືອເຊິ່ງກັນແລະກັນດ້ານກົດໝາຍ ແລະ ສົ່ງຜູ້ຮ້າຍຂ້າມແດນ ທີ່ມີປະສິດທິພາບ ແລະ ສົນທິສັນຍາທີ່ກ່ຽວຂ້ອງໃນເລື່ອງດັ່ງກ່າວ ຫຼື ການຕົກລົງຕ່າງໆ ຈະເຮັດໃຫ້ການຮ່ວມມືລະຫວ່າງປະເທດຕ່າງໆ ເປັນໄປຢ່າງຄ່ອງຕົວ ແລະ ທັນກັບເວລາ. ໃນການຮ້ອງຟ້ອງຄະດີອາຍາຂ້າມຊາດ, ບັນດາລັດຈຳຕ້ອງມີກົດໝາຍການສົ່ງຜູ້ຮ້າຍຂ້າມແດນທີ່ມີປະສິດທິພາບ ເພື່ອນຳເອົາຜູ້ກະທຳຜິດມາສູ່ຂະບວນການຍຸຕິທຳ ເພື່ອຮ້ອງຟ້ອງດຳເນີນຄະດີໃນລັດຂອງຕົນ. ບັນດາລັດຍັງຕ້ອງມີກົດໝາຍວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍໃນເລື່ອງອາຍາ ທີ່ເຂັ້ມແຂງ ເພື່ອ ຊ່ວຍໃຫ້ສາມາດໄດ້ຂໍ້ມູນຫຼັກຖານຈາກປະເທດອື່ນ ເຊັ່ນ ບັນທຶກທະນາຄານ, ຂໍ້ມູນໂທລະສັບ ແລະ ຄຳໃຫ້ການຂອງພະຍານ. ອີກຮູບການອື່ນຂອງການຮ່ວມມືສາກົນ ຍັງລວມມີການໂອນຕົວນັກໂທດ, ການຮ່ວມມືຮິບ ຫຼື ອາຍັດຊັບ, ການຮ່ວມມືໃນການນຳໃຊ້ເຕັກນິກການສືບສວນ-ສອບສວນພິເສດ ແລະ ການສືບສວນ-ສອບສວນຮ່ວມກັນ.

ການຮ່ວມມືສາກົນກ່ຽວກັບການຕ້ານອາຊະຍາກຳ ສາມາດດຳເນີນໄດ້ທັງໃນຮູບການທາງການ ແລະ ບໍ່ເປັນທາງການ.[12] ການຮ່ວມມືທາງການລວມມີການສືບສວນ-ສອບສວນຄະດີອາຍາ ແລະ ການຮ້ອງຟ້ອງຄະດີຂຶ້ນສານ ລວມທັງຄຳຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍ. ການຮ່ວມມືບໍ່ເປັນທາງການລວມມີການຊ່ວຍເຫຼືອລະຫວ່າງເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ສາມາດນຳໃຊ້ເພື່ອໃຫ້ໄດ້ຂໍ້ມູນຂ່າວສານຈາກປະເທດອື່ນ ກ່ອນໜ້າທີ່ຈະມີການອອກຄຳຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍຢ່າງເປັນທາງການ. ທັງສອງຮູບການຮ່ວມມືສາກົນ ໄດ້ຖືກຂັດຂວາງ

ຈາກຄວາມແຕກຕ່າງຂອງລະບົບກົດໝາຍ ແລະ ໂຄງສ້າງຂອງກົນໄກປົກປ້ອງ ແລະ ບັງຄັບປະຕິບັດກົດໝາຍ, ວິທີການສື່ສານທີ່ຍັງຈຳກັດກ່ຽວກັບຂໍ້ມູນຂ່າວສານ ແລະ ຂໍ້ມູນທາງອາຍາທີ່ໄດ້ມາຈາກການສືບ-ສອບສວນໃນທາງລັບ, ວັດທະນະທຳ ແລະ ສິ່ງທ້າທາຍຈາກພາສາ, ແລະ ການຂາດຄວາມເຊື່ອໃຈກັນ, ນີ້ເປັນສິ່ງທີ່ສຳຄັນສຳລັບໜ່ວຍງານຕ່າງໆ ທີ່ຈະຕິດຕໍ່ພົວພັນກັນແຕ່ຫົວທີ ຢ່າງບໍ່ເປັນທາງການກ່ຽວກັບການພົວພັນສາກົນ.

ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ແລະ ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ກຳນົດວິທີການທີ່ລະອຽດຕໍ່ການຮ່ວມມືທັງເປັນທາງການ ແລະ ບໍ່ເປັນທາງການ. ໂດຍທົ່ວໄປແລ້ວ, ລັດພາຄີສາມາດນຳໃຊ້ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ຊຶ່ງອະນຸສັນຍາດັ່ງກ່າວເປັນສິ່ງເພີ່ມເຕີມ ໄປພ້ອມກັບກົດໝາຍພາຍໃນຂອງຕົນ ເປັນພື້ນຖານສຳລັບການຮ່ວມມືສາກົນໃນການປະຕິບັດຄຳຮ້ອງຂໍສົ່ງຜູ້ຮ້າຍຂ້າມແດນ ແລະ ການຂໍການຊ່ວຍເຫຼືອທາງດ້ານກົດໝາຍ.

### 2.3.1. ການສົ່ງຜູ້ຮ້າຍຂ້າມແດນ

ການສົ່ງຜູ້ຮ້າຍຂ້າມແດນແມ່ນຂະບວນການທີ່ເປັນທາງການ ເມື່ອລັດໜຶ່ງ (ລັດທີ່ຖືກຮ້ອງຂໍ) ສົ່ງບຸກຄົນທີ່ລະບຸໃນຄຳຮ້ອງຂໍຂອງລັດອື່ນ(ລັດທີ່ຮ້ອງຂໍ), ຊຶ່ງບຸກຄົນນັ້ນຖືກຫາວ່າໄດ້ກະທຳຜິດທາງອາຍາ ຫຼື ໄດ້ຖືກສານຕັດສິນລົງໂທດ ຢູ່ໃນດິນແດນ -ລວມທັງການນຳໃຊ້ສິດອຳນາດນອກຂອບເຂດດິນແດນ-ຂອງລັດທີ່ຮ້ອງຂໍ. ລັດໜຶ່ງອາດຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ເພື່ອວ່າຜູ້ນັ້ນຈະສາມາດຕໍ່ຕ້ານການຮ້ອງຟ້ອງດຳເນີນຄະດີອາຍາຢູ່ລັດນັ້ນ ຫຼື ປະຕິບັດໂທດອາຍາ ຢູ່ລັດນັ້ນ ທີ່ກ່ຽວຂ້ອງກັບການກະທຳຜິດທີ່ສາມາດສົ່ງຜູ້ຮ້າຍຂ້າມແດນໄດ້.

ບັນດາລັດອາດຂໍ ຫຼື ສະໜອງການສົ່ງຜູ້ຮ້າຍຂ້າມແດນ ໃນຄະດີທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດ ໂດຍຜ່ານຫຼາຍຮູບການດຳເນີນການທີ່ແຕກຕ່າງກັນ, ລວມທັງການດຳເນີນການບົນພື້ນຖານສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ, ເຊັ່ນດຽວກັນ ກັບການດຳເນີນການບົນພື້ນຖານກົດໝາຍພາຍໃນຂອງລັດນັ້ນ ໃນກໍລະນີບໍ່ມີສົນທິສັນຍາ. ການກະທຳຜິດ ທີ່ສາມາດສົ່ງເປັນຜູ້ຮ້າຍຂ້າມແດນໄດ້ ແມ່ນການກະທຳຜິດພາຍໃຕ້ກົດໝາຍພາຍໃນຂອງສອງລັດ ທັງລັດທີ່ຮ້ອງຂໍ ແລະ ລັດທີ່ຖືກຮ້ອງຂໍ. ນີ້ເອີ້ນວ່າ ເງື່ອນໄຂເປັນຄວາມຜິດທາງອາຍາໃນສອງດິນແດນສຳລັບການສົ່ງຜູ້ຮ້າຍຂ້າມແດນ-ບາງຄັ້ງກໍເອີ້ນວ່າ ຄວາມຜິດທາງອາຍາໃນສອງດິນແດນ (dual-criminality).

ສົນທິສັນຍາການຕ້ານອາຊະຍາກຳທີ່ມີການຈັດຕັ້ງ (ມາດຕາ 16(1)) ແລະ ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ (ມາດຕາ 1(3)), ຊຶ່ງເຮັດໃຫ້ການກະທຳຜິດໃນສະຖານການລັກລອບ... ເປັນເປົ້າໝາຍດັດປັບຂອງສົນທິສັນຍາ) ແມ່ນຕົວຢ່າງຂອງສົນທິສັນຍາຫຼາຍຝ່າຍ ໃນການດຳເນີນການສົ່ງຜູ້ຮ້າຍຂ້າມແດນ. ມາດຕາ 16(1) ຂອງສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ກຳນົດຂອບເຂດພັນທະໃນການສົ່ງຜູ້ຮ້າຍຂ້າມແດນ. ພາຍໃຕ້ກົດໝາຍພາຍໃນ, ລັດພາຄີຕ້ອງຮັບປະກັນວ່າການກະທຳຜິດພາຍໃຕ້ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ແລະ ການກະທຳຜິດໃນອະນຸສັນຍາວ່າດ້ວຍການຕ້ານການລັກລອບ... ແມ່ນການກະທຳຜິດທີ່ສາມາດສົ່ງຜູ້ຮ້າຍຂ້າມແດນໄດ້. ຄຳຮ້ອງການສົ່ງຜູ້ຮ້າຍຂ້າມແດນຄວນດຳເນີນໃຫ້ສອດຄ່ອງກັບກົດໝາຍສາກົນທີ່ກ່ຽວຂ້ອງ.

[12] ການຮ່ວມມືທັງຮູບການທາງການ ແລະ ບໍ່ເປັນທາງການ ແມ່ນສ່ວນປະກອບເພີ່ມເຕີມ.ໃນບາງກໍລະນີ ການຮ່ວມມືບໍ່ເປັນທາງການ ຈະກາຍເປັນການຮ່ວມມືທາງການ, ແຕ່ເມື່ອການຮ່ວມມືໄດ້ເປັນທາງການແລ້ວ, ການຮ່ວມມືບໍ່ເປັນທາງການອາດຍັງສືບຕໍ່ດຳເນີນຢູ່. ຕົວຢ່າງ, ໃນຂັ້ນຕອນແຕ່ຫົວທີຂອງການສືບສວນ-ສອບສວນ, ການຮ່ວມມືບໍ່ເປັນທາງການລະຫວ່າງ ອົງການປົກປ້ອງກົດໝາຍສາມາດເປັນປະໂຫຍດໃນການເກັບກຳຂໍ້ມູນທີ່ນຳໄປສູ່ການສືບສວນ-ສອບສວນ ໃນກໍລະນີທີ່ມີເວລາຈຳກັດ. ໃນຕອນອື່ນໆຈາກນັ້ນ, ຂໍ້ມູນທີ່ໄດ້ຮັບຢ່າງບໍ່ເປັນທາງການ ອາດຈຳເປັນຕ້ອງໄດ້ຮັບໃຫ້ຖືກຕ້ອງໂດຍຜ່ານວິທີທາງການ ເພື່ອຮັບປະກັນວ່າຂໍ້ມູນນັ້ນຈະຖືວ່າເປັນຂໍ້ມູນທີ່ຖືກຕ້ອງຕາມກົດໝາຍ ແລະ ສານ ຮັບເອົາເປັນຫຼັກຖານ (UNODC 2011, ຄູ່ມືການຝຶກອົບຮົມໃນລວງເລິກກ່ຽວກັບການສືບສວນ-ສອບສວນ ແລະ ການຮ້ອງຟ້ອງຄະດີການລັກລອບເອົາຄົນເຂົ້າ-ອອກປະເທດ, ໜ້າ 3, ເບິ່ງໄດ້ຈາກ http://www.unodc.org/documents/human-trafficking/Migrant-Smuggling/In-Depth_Training_Manual_SOM_en_wide_use.pdf).

## ຂໍ້ຄິດເຫັນ: ຮັບປະກັນກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ ຊຸກຍູ້ກົດໝາຍຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ

ບັນດາລັດອາດນໍາໃຊ້ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາທີ່ມີການຈັດຕັ້ງ ເປັນພື້ນຖານທາງດ້ານກົດໝາຍໂດຍກົງສໍາລັບການຮ້ອງຂໍ ແລະ ການອະນຸມັດສົ່ງຜູ້ຮ້າຍຂ້າມແດນ. ເຖິງຢ່າງໃດກໍຕາມ, ເມື່ອບັນດາລັດ ຫາກບໍ່ຍອມຮັບການນໍາໃຊ້ສົນທິສັນຍາສະບັບນີ້ເພື່ອ ເພື່ອຈຸດປະສົງດັ່ງກ່າວນີ້ ແລະ ຮຽກຮ້ອງໃຫ້ນໍາໃຊ້ບ່ອນອີງທາງດ້ານກົດໝາຍອື່ນສໍາລັບການສົ່ງຜູ້ຮ້າຍຂ້າມແດນ (ຕົວຢ່າງ ກົດໝາຍພາຍໃນ ຫຼື ສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນສະເພາະ), ບັນດາລັດກໍຄວນຮັບປະກັນວ່າ ການລັກລອບເອົາຄົນເຂົ້າ-ອອກປະເທດ ໄດ້ລວມໄວ້ໃນປະເພດການກະທໍາຜິດ ທີ່ສາມາດສົ່ງຜູ້ຮ້າຍຂ້າມແດນໄດ້. ຕົວຢ່າງ, ຖ້າຫາກລັດໜຶ່ງ ໄດ້ກໍານົດ"ປະເພດການກະທໍາຜິດ" ທີ່ສາມາດສົ່ງຜູ້ຮ້າຍຂ້າມແດນໄດ້ ໃນກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນຂອງຕົນ, ກໍມີຄວາມຈໍາເປັນຕ້ອງໄດ້ຮັບປະກັນວ່າການກະທໍາຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ ໄດ້ນອນໃນປະເພດການກະທໍາຜິດດັ່ງກ່າວ. ນີ້ຈະເປັນການຮັບປະກັນການປະຕິບັດພັນທະໃນການໃຫ້ຄວາມຮ່ວມມືສາກົນ ຕາມສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາທີ່ມີການຈັດຕັ້ງ ຊຶ່ງນໍາໃຊ້ຕໍ່ການກະທໍາຜິດດັ່ງກ່າວ ໃນອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ.

### 2.3.2. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ

ການຊ່ວຍເຫຼືອເຊິ່ງກັນ ແລະກັນທາງດ້ານກົດໝາຍ (Mutual legal assistance (MLA)) ແມ່ນຂະບວນການໜຶ່ງໂດຍລັດສະເໜີ ແລະ ສະໜອງໃນຮູບການລັດ ຕໍ່ ລັດ ໃນການຊ່ວຍເຫຼືອສືບສວນ-ສອບສວນຄະດີອາຍາ, ການຮ້ອງຟ້ອງດໍາເນີນຄະດີ ແລະ ບາດກ້າວຕ່າງໆໃນຂະບວນການດໍາເນີນຄະດີທາງອາຍາ. ປະເພດຂອງການຊ່ວຍເຫຼືອອາດຖືກກໍານົດໄວ້ໃນສົນທິສັນຍາທີ່ກ່ຽວຂ້ອງ ຫຼື ກົດໝາຍພາຍໃນປະເທດ. ສົນທິສັນຍາວ່າດ້ວຍການ ຕ້ານອາຊະຍາກໍາທີ່ມີການຈັດຕັ້ງ ກໍານົດປະເພດຂອງການຊ່ວຍເຫຼືອ ຊຶ່ງອາດສະເໜີຂໍການຊ່ວຍເຫຼືອຄື:

- ການເອົາຫຼັກຖານ ຫຼື ຄໍາໃຫ້ການຂອງບຸກຄົນ;
- ການສົ່ງເອກະສານທາງດ້ານຕຸລາການ;
- ການດໍາເນີນການຄົ້ນຫາ ແລະ ການຮິບຊັບ ແລະ ອາຍັດຊັບສິນ;
- ການກວດກາວັດຖຸ ແລະ ສະຖານທີ່;
- ການສະໜອງຂໍ້ມູນຂ່າວສານ, ຫຼັກຖານ ແລະ ການຕີລາຄາຂອງຊ່ຽວຊານ;
- ການສະໜອງສະບັບຕົ້ນ ຫຼື ສໍາເນົາເອກະສານ ແລະ ບັນທຶກຕ່າງໆທີ່ກ່ຽວຂ້ອງ, ລວມທັງເອກະສານທາງການ, ບັນຊີທະນາຄານ, ການເງິນ ແລະ ບັນຊີວິສາຫະກິດ ຫຼື ບໍລິສັດ;
- ລະບຸ ຫຼື ດໍາເນີນການຮິບຊັບ, ຊັບສິນ, ນິຕິກໍາອຸປະກອນ ຫຼື ສິ່ງອື່ນໆທີ່ໃຊ້ເປັນຫຼັກຖານ; ແລະ
- ການອໍານວຍຄວາມສະດວກໃຫ້ບຸກຄົນໃດໜຶ່ງມີໜ້າ ໂດຍສະໝັກໃຈ ຢູ່ລັດທີ່ຮ້ອງຂໍ.





**ແຜນວາດ 5: ສັງລວມຂະບວນການດຳເນີນຄຳຮ້ອງຂໍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ**

**ປະເທດ ກ ພະຍາຍາມຮ້ອງຟ້ອງຄະດີອາຍາພົນລະເມືອງ, ຊຶ່ງການກະທຳຜິດເກີດຂຶ້ນຢູ່ປະເທດ ຂ.**

ອົງການປົກປ້ອງກົດໝາຍ ຫຼື ອົງການໄອຍະການຂອງປະເທດ ກ ກຳນົດຄວາມຈຳເປັນສຳລັບການຊ່ວຍເຫຼືອ ແລະ ສົ່ງຄຳຮ້ອງຂໍການຊ່ວຍເຫຼືອໄປຍັງອົງການໃຈກາງປະສານງານຂອງຕົນ

↓

**ອົງການໃຈກາງປະສານງານຂອງປະເທດ ກ ກຳນົດລັກສະນະ ແລະ ປະເພດຂອງການຂໍຄວາມຊ່ວຍເຫຼືອ ທີ່ຈະຂໍຈາກປະເທດ ຂ ເຊັ່ນ:**

| ຫຼັກຖານ ແລະ ເອກະສານ | ຄົ້ນຫາ ແລະ ຮິບຊັບ | ການຈັດຫາວັດຖຸສິ່ງຂອງຢ່າງຖືກຕ້ອງຕາມກົດໝາຍໃນການຄຸ້ມຄອງຂອງໜ່ວຍງານປົກປ້ອງກົດໝາຍ | ຂໍເອົາຄຳໃຫ້ການ, ຫຼັກຖານ ຫຼື ຊ່ວຍເຫຼືອສືບສວນ-ສອບສວນຢູ່ຕ່າງປະເທດ |
|---|---|---|---|

↓

**ປະເທດ ຂ ໄດ້ຮັບຄຳຮ້ອງຈາກ ປະເທດ ກ ແລະ ປະເມີນຄຳຮ້ອງຂໍ.**

**ປະເທດ ຂ ອະນຸມັດ ຫຼື ປະຕິເສດຄຳຮ້ອງ, ໂດຍພິຈາລະນາເງື່ອນໄຂສຳລັບການປະຕິເສດຄຳຮ້ອງຂໍຄວາມຊ່ວຍເຫຼືອ ເງື່ອນໄຂຂອງສົນທິສັນຍາທີ່ກ່ຽວຂ້ອງ ແລະ ປັດໃຈອື່ນໆ ທີ່ກ່ຽວຂ້ອງ.**

| ປະເທດ ຂ ປະຕິບັດຄຳຮ້ອງຂໍຄວາມຊ່ວຍເຫຼືອ. | ອົງການໃຈກາງປະສານງານ ຂອງປະເທດ ຂ ວັດຖຸສິ່ງຂອງທີ່ຮ້ອງຂໍໃຫ້ປະເທດ ກ. ປະເທດ ກ ນຳໃຊ້ ວັດຖຸສິ່ງຂອງໃນການດຳເນີນການສືບສວນ-ສອບສວນ ຫຼື ຮ້ອງຟ້ອງດຳເນີນຄະດີອາຍາຂອງຕົນ. |
|---|---|

## ຂໍ້ຄິດເຫັນ: ຮັບປະກັນວ່າການຊ່ວຍເຫຼືອເຊິ່ງກັນແລະກັນທາງກົດໝາຍ ໃນປະເທດຊຸກຍູ້ການຮ້ອງຟ້ອງດຳເນີນຄະດີການລັກລອບ...

ມາດຕາ 18(1) ຂອງສົນທິສັນຍາຕ້ານການອາຊະຍາກຳທີ່ມີການຈັດຕັ້ງ ກຳນົດລະບຽບກ່ຽວກັບການຊ່ວຍເຫຼືອເຊິ່ງກັນ ແລະກັນທາງດ້ານກົດໝາຍ ທີ່ຄົບຖ້ວນ, ຊຸກຍູ້ໃຫ້ບັນດາລັດພາຄີ ໄດ້ຮ່ວມມື ແລະ ສະໜອງການຊ່ວຍເຫຼືອເຊິ່ງກັນແລະກັນທາງກົດໝາຍຢ່າງກວ້າງຂວາງ ໃນການສືບສວນ-ສອບສວນ, ການຮ້ອງຟ້ອງດຳເນີນຄະດີອາຍາ ແລະ ການດຳເນີນຄະດີ ທີ່ກ່ຽວຂ້ອງກັບ ການກະທຳຜິດ ທີ່ກຳນົດໄວ້ໃນໂດຍສົນທິສັນຍາ ແລະ ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ. ຕົວຢ່າງ, ເຖິງແມ່ນວ່າຄະດີການລັກລອບເອົາຄົນເຂົ້າ-ອອກປະເທດອາດຖືກຮ້ອງຟ້ອງດຳເນີນຄະດີໃນປະເທດປາຍທາງ, ຫຼັກຖານສຳຄັນອາດຢູ່ປະເທດຕົ້ນທາງ ຂອງຜູ້ຖືກເຄາະຮ້າຍ. ຮັບກະກັນວ່າ ເຈົ້າໜ້າທີ່ຕຳຫຼວດ, ໄອຍະການ ແລະ ສານສາມາດຮ່ວມມືກັນພາຍໃນປະເທດ ແລະ ຂ້າມແດນ-ທັງຮູບການເປັນທາງການ ແລະ ບໍ່ເປັນທາງການ-ແມ່ນມີຄວາມສຳຄັນຫຼາຍໃນການຮ້ອງຟ້ອງດຳເນີນຄະດີການລັກລອບເອົາຄົນເຂົ້າ-ອອກປະເທດ ແລະ ການຟອກເງິນ ຢ່າງປະສົບຜົນສຳເລັດ.

## 2.4. ການກຳນົດການສໍ້ລາດບັງຫຼວງເປັນຄະດີອາຍາ

ການກຳນົດການສໍ້ລາດບັງຫຼວງເປັນຄະດີອາຍາແມ່ນພັນທະເພີ່ມເຕີມທີ່ສຳຄັນໜຶ່ງຂອງສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ຊຶ່ງອາດຊ່ວຍສະກັດກັ້ນການກະທຳ ຫຼື ການກະທຳຜິດ ທີ່ກ່ຽວຂ້ອງກັບການລັກລອບເອົາຄົນເຂົ້າ-ອອກປະເທດ ເຊັ່ນອາຊະຍາກຳທີ່ກ່ຽວຂ້ອງກັບ ການປອມແປງໜັງສືເດີນທາງ ໂດຍການໃຫ້ສິນບົນແກ່ເຈົ້າໜ້າທີ່ຢູ່ດ່ານຊາຍແດນ. ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງກຳນົດກອບກົດໝາຍທີ່ຈຳເປັນ ສຳລັບການຮ່ວມມືສາກົນ ໃນການຕ້ານການສໍ້ລາດບັງຫລວງ.[13] ມາດຕາ 8 ຮຽກຮ້ອງໃຫ້ລັດພາຄີກຳນົດການສໍ້ລາດບັງຫຼວງເປັນການກະທຳຜິດໃນຄະດີອາຍາ.

ສຳລັບຄຳແນະນຳເພີ່ມເຕີມ, ສົນທິສັນຍາຂອງອົງການ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (the United Nations Convention against Corruption (UNCAC))[14] ກຳນົດກອບກົດໝາຍສາກົນທີ່ຄົບຊຸດ ເພື່ອຕ້ານການສໍ້ລາດບັງຫຼວງ ແລະ ຍັງເຊື່ອມໂຍງກັນລະຫວ່າງການສໍ້ລາດບັງຫຼວງ ແລະ ອາຊະຍາກຳທີ່ມີການຈັດຕັ້ງ ແລະ ອາຊະຍາກຳທາງເສດຖະກິດ, ລວມທັງການຟອກເງິນ.[15]

[13] ມະຕິຂອງສະມັດຊາໃຫຍ່ອົງການສປຊ ເລກທີ 55/25 ວັນທີ 15 ພະຈິກ 2000, ສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ.

[14] The UNCAC ອະທິບາຍສົນທິສັນຍາຕ້ານອາຊະຍາກຳທີ່ມີການຈັດຕັ້ງ ແລະ ກຳນົດກອບການຮ່ວມມືສາກົນທີ່ຮອບດ້ານເພື່ອແກ້ໄຂບັນຫາການສໍ້ລາດບັງຫຼວງ.

[15] ຄຳນຳ, ສົນທິສັນຍາຂອງອົງການ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ.

# ພາກ 3

## ສັງລວມຂໍ້ຄິດເຫັນສຳລັບການສ້າງກົດໝາຍທີ່ມີປະສິດທິຜົນ

### ສະຫຼຸບຂໍ້ຄິດເຫັນສຳລັບການສ້າງກົດໝາຍທີ່ມີປະສິດທິຜົນ ເພື່ອກຳນົດການລັກລອບເອົາຄົນເຂົ້າ-ອອກປະເທດເປັນ ການກະທຳຜິດທາງອາຍາ:

- ✓ ກຳນົດການກະທຳຜິດກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ ຢ່າງຮອບດ້ານຄົບຖ້ວນ ຍ້ອນພັນທະສາກົນຮຽກຮ້ອງຫຼາຍກວ່າກຳນົດເປັນກົດໝາຍສາມັນທີ່ແນໃສ່ການເຂົ້າເມືອງຜິດກົດໝາຍເທົ່ານັ້ນ.
- ✓ ຮັບປະກັນວ່າຜູ້ຖືກລັກລອບບໍ່ຖືກຮ້ອງຟ້ອງດຳເນີນຄະດີອາຍາ ຍ້ອນເຫດຜົນລາວຖືກລັກລອບ. ຮັບຮູ້ວ່າອະນຸສັນຍາຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ກຳນົດການປົກປ້ອງສິດທິຂອງຜູ້ຖືກລັກລອບໃຫ້ສອດຄ່ອງກັບພັນທະຂອງ “ລັດພາຄີ” ພາຍໃຕ້ກົດໝາຍສາກົນ. (ກົງກັນຂ້າມ, ອະນຸສັນຍາກຳນົດໃຫ້ລົງໂທດຜູ້ດຳເນີນການ, ຜູ້ຈັດຕັ້ງກິດຈະການລັກລອບເອົາຄົນເຂົ້າ-ອອກປະເທດ). ບັນດາລັດພາຄີ ຄວນພິຈາລະນາຄວາມຮຽກຮ້ອງຕ້ອງການສະເພາະຂອງແມ່ຍິງ
- ✓ ຮັບປະກັນວ່າພະຍານ ໄດ້ຮັບການປົກປ້ອງໃນຄະດີການລັກລອບເອົາຄົນເຂົ້າ-ອອກປະເທດ.
- ✓ ຮັບປະກັນວ່າ ຜູ້ກະທຳຜິດ ຕົກຢູ່ໃນເງື່ອນໄຂຂອງສາເຫດທີ່ພາໃຫ້ມີການເພີ່ມໂທດທາງອາຍາເພື່ອໃຫ້ໄດ້ຮັບໂທດທີ່ສູງກວ່າ.
- ✓ ກຳນົດບົດບັນຍັດກ່ຽວກັບການກະທຳຜິດໃນສະຖານການລັກລອບ ແລະ ການຄ້າມະນຸດແຍກອອກກັນຕ່າງຫາກ ຍ້ອນວ່າອົງປະກອບຂອງການກະທຳຜິດແຕກຕ່າງກັນ.
- ✓ ກຳນົດສິດອຳນາດນອກຂອບເຂດດິນແດນ ເພື່ອຈະສາມາດເອົາຜິດກັບຜູ້ດຳເນີນການ, ຜູ້ຈັດຕັ້ງກິດຈະການເອົາຄົນເຂົ້າ-ອອກປະເທດ ບໍ່ສາມາດສວຍໃຊ້ຊ່ອງຫວ່າງກົດໝາຍໃນປະເທດຕ່າງໆໄດ້.
- ✓ ຮັບຮູ້ວ່າ ອະນຸສັນຍາວ່າດ້ວຍການຕ້ານການລັກລອບເອົາຄົນເຂົ້າ-ອອກປະເທດ ກຳນົດມາດຕະຖານຕໍ່າສຸດ, ຊຶ່ງສາມາດພັດທະນາຕໍ່ໃຫ້ເຂັ້ມແຂງໃນກົດໝາຍພາຍໃນປະເທດ.
- ✓ ລວມທັງການກຳນົດໄວ້ໃນກົດໝາຍຕ້ານການຟອກເງິນ ທີ່ບໍ່ຈຳເປັນຕ້ອງຕັດສິນການກະທຳຜິດຕົ້ນຕໍ (ຕົວຢ່າງ ການກະທຳຜິດໃນການລັກລອບ...) ກ່ອນເພື່ອນຳໃຊ້ມາດຕະການຕໍ່ການກະທຳຜິດການຟອກເງິນ.
- ✓ ຮັບປະກັນວ່າການສົ່ງຜູ້ຮ້າຍຂ້າມແດນ ນຳໃຊ້ກັບການກະທຳຜິດໃນສະຖານການລັກລອບເອົາຄົນເຂົ້າ-ອອກປະເທດ.
- ✓ ຮັບປະກັນວ່າມາດຕະການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍພາຍໃນປະເທດ ຊຸກຍູ້ການຮ້ອງຟ້ອງດຳເນີນຄະດີການລັກລອບເອົາຄົນເຂົ້າ-ອອກປະເທດ.




REGIONAL SUPPORT OFFICE
THE BALI PROCESS

**ຕິດຕໍ່ພົວພັນ**

**ຫ້ອງການສະໜັບສະໜູນໃນພາກພື້ນ – Bali Process (ບາລີ ໂປຣເຊສ໌)**
ຊັ້ນທີ 27th ຕຶກລັດຈານາກຣານ
183 ຖະໜົນສາທອນໃຕ້, ສາທອນ ບາງກອກ 10120, ປະເທດໄທ
Tel. +66 2 343 9477 Fax. +66 2 676 7337
info@rso.baliprocess.net



# The Bali Process (ບາລີ ໂປຣເຊສ໌)

ກ່ຽວກັບການລັກລອບເອົາຄົນເຂົ້າ-ອອກປະເທດ, ການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ

http://www.baliprocess.net/